# ທະນາຄານແຫ່ງປະເທດຈີນ (ຮຸ້ງກົງ) ຈຳກັດ, ສາຂາ ນະຄອນຫຼວງ ວຽງຈັນ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025

ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ ສາຂາ ນະຄອນຫຼວງວຽງຈັນ

**ສາລະບານ**


| | ໜ້າ |
|---|---|
| ຂໍ້ມູນທົ່ວໄປ | 1 |
| ບົດລາຍງານຂອງຄະນະບໍລິຫານ | 2 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 3 - 5 |
| ໃບລາຍງານຜົນການດຳເນີນງານ | 6 - 7 |
| ໃບລາຍງານຖານະການເງິນ | 8 - 10 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 11 |
| ໃບລາຍງານກະແສເງິນສົດ | 12 - 13 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 14 - 41 |

## ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ ສາຂາ ນະຄອນຫຼວງວຽງຈັນ

ຂໍ້ມູນທົ່ວໄປ

**ສາຂາ**

ທະນາຄານ ແຫ່ງປະເທດຈີນ (ຮົງກົງ) ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາຂອງທະນາຄານ ແຫ່ງປະເທດຈີນ (ຮົງກົງ) ຈຳກັດທີ່ສ້າງຕັ້ງໃນ ສປປ ລາວ ແລະ ດຳເນີນກິດຈະການພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານສະບັບເລກທີ 01/ທຫລ ທີ່ອອກໂດຍ ທະນາຄານແຫ່ງ ສປປ ລາວ ("ທຫລ") ໃນວັນທີ 13 ມັງກອນ 2020.

ທຶນຈົດທະບຽນເບື້ອງຕົ້ນຂອງສາຂາແມ່ນ 405,100,000,000 ກີບ. ທຶນຈົດທະບຽນທີ່ໄດ້ຖອກແລ້ວ ນະວັນທີ 31 ທັນວາ 2025 ແມ່ນ 405,100,000,000 ກີບ (31 ທັນວາ 2024: 405,100,000,000 ກີບ).

ກິດຈະກຳຫຼັກຂອງສາຂາແມ່ນໃຫ້ການບໍລິການລະດົມທຶນ ແລະ ສະໜອງເງິນກູ້ເພື່ອການປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ເສດຖະກິດຂອງລາວ.

ສາຂາຕັ້ງຢູ່ ຕຶກວຽງຈັນເຊັນເຕີ, ຖະໜົນ ຄູວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

**ຄະນະບໍລິຫານ ແລະ ຕົວແທນທາງດ້ານກົດໝາຍ**

ທາງດ້ານກົດໝາຍຂອງສາຂາໃນລະຫວ່າງປີສິ້ນສຸດໃນວັນທີ 31 ທັນວາ 2025 ແລະ ນະວັນທີອອກບົດລາຍງານການເງິນນີ້ແມ່ນທ່ານນາງ Li Shuping, ຜູ້ຈັດການ.

**ນັກກວດສອບ**

ນັກກວດສອບບັນຊີຂອງສາຂາ ແມ່ນບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ.

## ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈໍາກັດ ສາຂາ ນະຄອນຫຼວງວຽງຈັນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງທະນາຄານແຫ່ງປະເທດຈີນ (ຮົງກົງ) ຈໍາກັດ, ສາຂານະຄອນຫຼວງວຽງຈັນ ("ສາຂາ") ມີຄວາມຍິນດີນໍາສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນຂອງສາຂານະວັນທີ ແລະ ສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025.

**ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນ**

ຄະນະບໍລິຫານຂອງສາຂາ ແມ່ນມີຄວາມຮັບຜິດຊອບຕໍ່ເອກະສານລາຍງານການເງິນຂອງແຕ່ລະປີການບັນຊີທີ່ໃຫ້ຄວາມຖືກຕ້ອງແລະເປັນທໍາ ໂດຍສອດຄ່ອງຕາມຖານະການເງິນຂອງສາຂາ, ການດໍາເນີນງານ ແລະ ກະແສເງິນສົດສໍາຫຼັບປີ. ສໍາຫຼັບການກະກຽມເອກະສານລາຍງານການເງິນດັ່ງກ່າວ, ຄະນະບໍລິຫານຕ້ອງໄດ້:

- ຄັດເລືອກເອົາບັນດານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສອດຄ່ອງ;
- ພິຈາລະນາບັນດາລາຍການຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານບັນຊີທີ່ເໝາະສົມໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ການປະຕິບັດທີ່ບໍ່ສອດຄ່ອງທີ່ສໍາຄັນຕໍ່ກັບມາດຕະຖານການບັນຊີ ຕ້ອງຖືກນໍາມາເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດໍາເນີນທຸລະກິດ, ເວັ້ນເສຍແຕ່ໃນກໍລະນີທີ່ສາຂາຫາກ ຫຼື ຄາດຄະເນວ່າສາຂາບໍ່ສາມາດດໍາເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານຮັບປະກັນວ່າ ການບັນທຶກທາງບັນຊີໄດ້ຖືກປະຕິບັດຢ່າງຖືກຕ້ອງ ແລະ ໄດ້ເປີດເຜີຍຖານະການເງິນຂອງສາຂາຢ່າງເໝາະສົມໃນທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນໍາໃຊ້ຢູ່ ຄະນະບໍລິຫານຂອງສາຂາຍັງຮັບຜິດຊອບຕໍ່ການຮັກສາຊັບສິນຂອງສາຂາ ແລະ ດ້ວຍເຫດນັ້ນ ຕ້ອງມີຂັ້ນຕອນທີ່ເໝາະສົມ ເພື່ອປ້ອງກັນ ແລະ ຊອກຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຂໍຢັ້ງຢືນວ່າ ສາຂາໄດ້ປະຕິບັດຕາມຂໍ້ກໍານົດທີ່ກ່າວມາຂ້າງເທິງນັ້ນ ໃນການກະກຽມເອກະສານລາຍງານການເງິນທີ່ກ່ຽວຂ້ອງ.

**ຖະແຫຼງການຂອງຄະນະບໍລິຫານ**

ຄະນະບໍລິຫານຂອງສາຂາມີຄວາມຍິນດີຖະແຫຼງວ່າເອກະສານລາຍງານການເງິນທີ່ໄດ້ຄັດຕິດນີ້ແມ່ນໄດ້ກະກຽມຖືກຕ້ອງຕາມຄວາມເປັນຈິງໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ ແລະ ບັນດາລະບຽບການທີ່ອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມເອກະສານລາຍງານການເງິນ.

ຕາງໜ້າ ແລະ ໃນນາມຄະນະບໍລິຫານ

ທ່ານນາງ. Li Shuping
ຜູ້ຈັດການ

ນະຄອນຫຼວງວຽງຈັນ, ສປປ ລາວ

9 ເມສາ 2026

EY
Building a better
working world

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 61245636/11729910 -LAS

**ບົດລາຍງານຂອງນັກກວດສອບອິດສະຫຼະ**

**ຮຽນ: ຄະນະບໍລິຫານຂອງທະນາຄານແຫ່ງປະເທດຈີນ (ຮົງກົງ) ຈໍາກັດ ສາຂານະຄອນຫຼວງວຽງຈັນ**

*ຄໍາເຫັນ*

ພວກຂ້າພະເຈົ້າໄດ້ດໍາເນີນການກວດສອບເອກະສານລາຍງານທາງການເງິນຂອງ ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈໍາກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນນະວັນທີ 31 ທັນວາ 2025, ໃບລາຍງານຜົນການດໍາເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສໍາລັບປີທີ່ສິ້ນສຸດ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ທີ່ປະກອບດ້ວຍບົດສະຫຼຸບຂອງບັນດານະໂຍບາຍການບັນຊີທີ່ສໍາຄັນ.

ໃນຄໍາເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງສາຂາແມ່ນໄດ້ກະກຽມໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ ແລະ ບັນດາລະບຽບການທີ່ອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມເອກະສານລາຍງານການເງິນ.

*ພື້ນຖານໃນການອອກຄໍາເຫັນ*

ພວກຂ້າພະເຈົ້າໄດ້ດໍາເນີນການກວດສອບເອກະສານລາຍງານການເງິນຕາມມາດຕະຖານສາກົນດ້ານການກວດສອບ (ISAs). ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າຈະໄດ້ຖືກອະທິບາຍໃນຫົວຂໍ້ *ຄວາມຮັບຜິດຊອບຂອງນັກກວດສອບຕໍ່ກັບເອກະສານລາຍງານການເງິນຂອງບົດລາຍງານ* ສະບັບນີ້. ພວກຂ້າພະເຈົ້າມີຄວາມເປັນເອກະລາດຈາກທະນາຄານ ຕາມຫຼັກຈັນຍາບັນວິຊາຊີບບັນຊີຂອງຄະນະກໍາມະການມາດຕະຖານຈັນຍາບັນສາກົນ ສໍາລັບນັກວິຊາຊີບບັນຊີ (ລວມທັງ ມາດຕະຖານຄວາມເປັນເອກະລາດສາກົນ) (IESBA Code) ສໍາລັບການກວດສອບເອກະສານການເງິນຂອງວິສາຫະກິດທີ່ຕິດພັນກັບຜົນປະໂຫຍດສາທາລະນະ, ພ້ອມທັງຂໍ້ກໍານົດທາງຈັນຍາບັນທີ່ກ່ຽວຂ້ອງໃນການກວດສອບເອກະສານການເງິນຂອງວິສາຫະກິດທີ່ຕິດພັນກັບຜົນປະໂຫຍດສາທາລະນະໃນ ສປປ ລາວ. ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບດ້ານຈັນຍາບັນອື່ນໆ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີ ສໍາລັບນັກວິຊາຊີບບັນຊີ ຂອງສະພາມາດຕະຖານດ້ານຈັນຍາບັນສາກົນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄໍາເຫັນຂອງພວກຂ້າພະເຈົ້າ.

*ບັນຫາທີ່ຄວນເອົາໃຈໃສ່*

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນ ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີທີ່ໄດ້ຖືກນໍາໃຊ້ໂດຍສາຂາ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນໍາສະເໜີຖານະທາງການເງິນ, ຜົນການດໍາເນີນງານ ແລະ ກະແສເງິນສົດຂອງສາຂາ ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ຄໍາເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ຮັບການແກ້ໄຂຕໍ່ກັບບັນຫາດັ່ງກ່າວ.



A member firm of Ernst & Young Global Limited

EY
Building a better working world

*ຄວາມຮັບຜິດຊອບຂອງຄະນະບໍລິຫານຂອງສາຂາຕໍ່ເອກະສານລາຍງານການເງິນ*

ຄະນະບໍລິຫານຂອງສາຂາແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໃຫ້ສອດຄ່ອງກັບກົດໝາຍການການບັນຊີ ແຫ່ງ ສປປ ລາວ ແລະ ບັນດາລະບຽບການທີ່ອອກໂດຍທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ເອກະສານລາຍງານການເງິນ ແລະ ສໍາລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າມີຄວາມຈໍາເປັນໃນການກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງສາຂາທາງດ້ານຄວາມສືບເນື່ອງໃນການດໍາເນີນທຸລະກິດ, ລວມທັງການເປີດເຜີຍບັນຫາຕ່າງໆທີ່ກ່ຽວຂ້ອງກັບຫຼັກການແຫ່ງຄວາມສືບເນື່ອງໃນການດໍາເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານສາຂາຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດໍາເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານສາຂາມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

*ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ*

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອໄດ້ຮັບຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄໍາເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດໍາເນີນໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສໍາຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນໍາໃຊ້ເອກະສານລາຍງານການເງິນ.

ໃນການເປັນສ່ວນໜຶ່ງຂອງກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິດໄສແບບມືອາຊີບ ໃນຕະຫຼອດການດໍາເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກໍານົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດໍາເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄໍາເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.

- ທໍາຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄໍາເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງສາຂາ.

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນໍາໃຊ້ພື້ນຖານຂອງບັນຊີກ່ຽວຂ້ອງ ວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດໍາເນີນທຸລະກິດ ຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສໍາຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສໍາຄັນກ່ຽວກັບຄວາມອາດສາມາດຂອງສາຂາໃນການສືບເນື່ອງໃນການດໍາເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າ ສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສໍາຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອໃຫ້ສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄໍາເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອະນາຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ສາຂາຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດໍາເນີນທຸລະກິດ.

- ປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ໄດ້ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງໂດຍຄະນະບໍລິຫານ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານກ່ຽວກັບບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສຳຄັນ ລວມມີບັນດາຂໍ້ບົກພ່ອງທີ່ສຳຄັນໃດໆໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ພົບເຫັນໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

**ບໍລິສັດ ເອີນແອນຢັງ ລາວ ຈຳກັດ**

ນະຄອນຫຼວງວຽງຈັນ, ສປປ ລາວ

9 ເມສາ 2026



A member firm of Ernst & Young Global Limited

ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ ສາຂານະຄອນຫຼວງວຽງຈັນ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025

| *ລຳດັບ* | *ລາຍການ* | *ບົດອະທິບາຍ ເລກທີ* | *2025 ລ້ານກີບ* | *2024 ລ້ານກີບ* |
|---|---|---|---|---|
| **ກ** | **ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ** | | | |
| **1.** | **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | **3** | 740,099 | 687,395 |
| **2.** | **ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ** | **3** | (249,458) | (270,319) |
| **I.** | **ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | | 490,641 | 417,076 |
| **3** | **ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ** | **4** | 36,115 | 27,187 |
| **4** | **ລາຍຈ່າຍຈາກຄ່າທຳນຽມ ແລະ ຄ່າບໍລິການ** | **4** | (4,696) | (4,501) |
| **5** | **ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ** | **5** | 106,722 | 175,479 |
| **II.** | **ລາຍຮັບສຸດທິຈາກການດຳເນີນງານ** | | 628,782 | 615,241 |
| **ຂ** | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | |
| **6** | **ລາຍຮັບອື່ນໆຈາກການດຳເນີນງານ** | | 3,379 | 290 |
| **7** | **ລາຍຈ່າຍການບໍລິຫານ** | | | |
| 7.1 | ລາຍຈ່າຍເງິນເດືອນ ແລະ ລາຍຈ່າຍອື່ນໆຂອງພະນັກງານ | 6 | (87,193) | (70,298) |
| 7.2 | ລາຍຈ່າຍບໍລິຫານອື່ນໆ | 7 | (24,725) | (23,940) |
| **8** | **ຄ່າຫຼູ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ** | **15** | (7,329) | (3,396) |
| **9** | **ລາຍຈ່າຍອື່ນໆການດຳເນີນງານ** | **8** | (12,896) | (3,107) |
| **10** | **ຫັກເງິນແຮສຳລັບເງິນກູ້ບໍ່ເກີດດອກອອກຜົນ** | **13** | 24,470 | (27,323) |

ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ ສາຂານະຄອນຫຼວງວຽງຈັນ

ໃບລາຍງານຜົນການດຳເນີນງານ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025

| *ລຳດັບ* | *ລາຍການ* | *ບົດອະທິບາຍ ເລກທີ* | *2025 ລ້ານກີບ* | *2024 ລ້ານກີບ* |
|---|---|---|---|---|
| **III.** | **ກຳໄລທັງໝົດກ່ອນຫັກອາກອນ** | | 524,488 | 487,467 |
| **11** | **ລາຍຈ່າຍອາກອນກຳໄລ** | **22.2** | (105,538) | (97,756) |
| **IV.** | **ກຳໄລຫຼັງຫັກອາກອນ** | | 418,950 | 389,711 |

ກະກຽມໂດຍ:

ທ່ານ Mr. Zhou Junyu
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານນາງ Li Shuping
ຜູ້ຈັດການ

ນະຄອນຫຼວງວຽງຈັນ, ສປປ ລາວ

9 ເມສາ 2026

ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ ສາຂານະຄອນຫຼວງວຽງຈັນ

ໃບລາຍງານຖານະການເງິນ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025

| *ລຳດັບ* | *ຊັບສິນ* | *ບົດອະທິບາຍ ເລກທີ* | *31/12/2025 ລ້ານກີບ* | *31/12/2024 ລ້ານກີບ* |
|---|---|---|---|---|
| **I** | **ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")** | | **9,801,959** | **7,166,823** |
| 1 | ເງິນສົດໃນຄັງ | 9 | 33,677 | 52,887 |
| 2 | ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ") | 10 | 9,768,282 | 7,113,936 |
| **II** | **ໜີ້ຕ້ອງຮັບຈາກທະນາຄານອື່ນ** | | **789,105** | **529,709** |
| 1 | ເງິນຝາກກະແສລາຍວັນ | 11.1 | 789,105 | 529,709 |
| **III** | **ການລົງທຶນໃນຫຼັກຊັບ** | | **626,567** | **163,000** |
| 1 | ຫຼັກຊັບທີ່ຖືຄອງຄົບກຳນົດອາຍຸ | 12 | 626,567 | 163,000 |
| **IV** | **ເງິນກູ້ຢືມໃຫ້ແກ່ລູກຄ້າ, ຫັກເງິນແຮສະເພາະສຳລັບເງິນກູ້** | **13** | **5,280,203** | **4,743,888** |
| **V** | **ເງິນກູ້ຢືມໃຫ້ແກ່ບໍລິສັດແມ່** | **14** | **405,907** | **3,740,533** |
| **VI** | **ຊັບສິນບັດຄົງທີ່ ແລະ ສິດນຳໃຊ້ຊັບສິນ** | | **16,221** | **8,544** |
| 1 | ຊັບສິນບັດຄົງທີ່ມີຕົວຕົນ | 15.1 | 9,735 | 2,641 |
| 2 | ສິດໃນການນຳໃຊ້ຊັບສິນ | 15.2 | 6,486 | 5,903 |
| **VII** | **ຊັບສິນອື່ນໆ** | | **85,357** | **84,544** |
| 1 | ດອກເບ້ຍຄ້າງຮັບ | 16 | 83,550 | 82,757 |
| 2 | ຊັບສິນອື່ນໆ | 17 | 1,807 | 1,787 |
| | **ລວມຊັບສິນ** | | **17,005,319** | **16,437,041** |

# ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ ສາຂານະຄອນຫຼວງວຽງຈັນ

ໃບລາຍງານຖານະການເງິນ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025

| *ລຳດັບ* | *ໜີ້ສິນ ແລະ ທຶນ* | *ບົດອະທິບາຍ ເລກທີ* | *31/12/2025 ລ້ານກີບ* | *31/12/2024 ລ້ານກີບ* |
|---|---|---|---|---|
| **I** | **ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ** | **18** | **515,135** | **1,264,604** |
| 1 | ເງິນຝາກກະແສລາຍວັນ | | 443,770 | 578,044 |
| 2 | ເງິນຝາກມີກຳນົດ | | 50,975 | 41,104 |
| 3 | ເງິນກູ້ຢືມ | | 20,390 | 645,456 |
| **II** | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **19** | **13,467,770** | **12,595,508** |
| 1 | ເງິນຝາກກະແສລາຍວັນ | | 4,677,380 | 4,612,731 |
| 2 | ເງິນຝາກປະຢັດ | | 568,942 | 379,190 |
| 3 | ເງິນຝາກມີກຳນົດ | | 8,221,448 | 7,603,587 |
| **III** | **ໜີ້ສິນອື່ນໆ** | | **285,259** | **236,643** |
| 1 | ດອກເບ້ຍຄ້າງຈ່າຍ | 20 | 146,633 | 165,133 |
| 2 | ໜີ້ຕ້ອງສົ່ງທາງອາກອນ | 22.1 | 65,871 | 32,397 |
| 3 | ໜີ້ຕ້ອງສົ່ງອື່ນໆ | 21 | 72,755 | 39,113 |
| | **ລວມໜີ້ສິນ** | | **14,268,164** | **14,096,755** |
| **IV** | **ທຶນ ແລະ ຄັງສຳຮອງ** | | | |
| 1 | ທຶນຈົດທະບຽນທີ່ຖອກແລ້ວ | 23 | 405,100 | 405,100 |
| 2 | ຄັງສຳຮອງສະສົມຕາມລະບຽບການ | | 225,017 | 183,122 |
| 3 | ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ | | 82,042 | 104,123 |
| 4 | ກຳໄລສະສົມ | | 2,024,996 | 1,647,941 |
| | **ລວມທຶນ** | | **2,737,155** | **2,340,286** |
| | **ລວມໜີ້ສິນ ແລະ ທຶນ** | | **17,005,319** | **16,437,041** |

ທະນາຄານແຫ່ງປະເທດຈີນ (ຮຸ້ນກິດ) ຈຳກັດ ສາຂານະຄອນຫຼວງວຽງຈັນ

ໃບລາຍງານຖານະການເງິນ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025

| *ລຳດັບ* | *ລາຍການນອກໃບລາຍງານຖານະການເງິນ* | *ບົດອະທິບາຍ ເລກທີ* | *31/12/2025 ລ້ານກີບ* | *31/12/2024 ລ້ານກີບ* |
|---|---|---|---|---|
| I | **ຄຳໝັ້ນສັນຍາ** | | | |
| ກ | **ຄຳໝັ້ນສັນຍາທາງການເງິນ** | | **1,466,604** | **1,110,969** |
| 1 | ຄຳໝັ້ນສັນຍາທາງການເງິນທີ່ໄດ້ໃຫ້ແກ່ລູກຄ້າ | | 1,466,604 | 1,110,969 |
| ຂ | **ຄຳໝັ້ນສັນຍາທາງການຄ້ຳປະກັນ** | | **31,455** | **85,517** |
| 1 | ຄຳໝັ້ນສັນຍາທາງການຄ້ຳປະກັນທີ່ໄດ້ໃຫ້ແກ່ລູກຄ້າ | | 31,455 | 85,517 |
| | **ລວມຄຳໝັ້ນສັນຍາ** | | **1,498,059** | **1,196,486** |
| II | **ຫຼັກຊັບຄ້ຳປະກັນ ແລະ ການຈຳນອງ** | | **747,093** | **747,014** |
| 1 | ຫຼັກຊັບຄ້ຳປະກັນ ແລະ ການຈຳນອງສຳລັບເງິນກູ້ໃຫ້ລູກຄ້າ | | 747,093 | 747,014 |
| | **ລວມຫຼັກຊັບຄ້ຳປະກັນ ແລະ ການຈຳນອງ** | | **747,093** | **747,014** |

ກະກຽມໂດຍ:

ທ່ານ Mr. Zhou Junyu
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານນາງ Li Shuping
ຜູ້ຈັດການ

ນະຄອນຫຼວງວຽງຈັນ, ສປປ ລາວ

9 ເມສາ 2026

# ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ ສາຂານະຄອນຫຼວງວຽງຈັນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025

| ລາຍການ | ທຶນຈົດທະບຽນທີ່ຖອກແລ້ວ ລ້ານກີບ | ຄັງສະສົມຕາມລະບຽບການ ລ້ານກີບ | ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ ລ້ານກີບ | ກຳໄລສະສົມ ລ້ານກີບ | ລວມ ລ້ານກີບ |
|---|---|---|---|---|---|
| **ຍອດເຫຼືອນະວັນທີ 1 ມັງກອນ 2024** | **405,100** | **144,151** | **74,203** | **1,297,201** | **1,920,655** |
| ກຳໄລສຸດທິພາຍໃນປີ | - | - | - | 389,711 | 389,711 |
| ຄັງສຳຮອງຕາມລະບຽບການ 2024 | - | 38,971 | - | (38,971) | - |
| ເກັບຄືນເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນພາຍໃນປີ | - | - | 27,323 | - | 27,323 |
| ຜົດດ່ຽງຈາກອັດຕາແລກປ່ຽນ | - | - | 2,597 | - | 2,597 |
| **ຍອດເຫຼືອນະວັນທີ 31 ມັງກອນ 2024** | **405,100** | **183,122** | **104,123** | **1,647,941** | **2,340,286** |
| ກຳໄລສຸດທິພາຍໃນປີ | - | - | - | 418,950 | 418,950 |
| ຄັງສຳຮອງຕາມລະບຽບການ 2025 | - | 41,895 | - | (41,895) | - |
| ເກັບຄືນເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນພາຍໃນປີ | - | - | (24,470) | - | (24,470) |
| ສ່ວນຜົດດ່ຽງຈາກອັດຕາແລກປ່ຽນ | - | - | 2,389 | - | 2,389 |
| **ຍອດເຫຼືອນະວັນທີ 31 ທັນວາ 2025** | **405,100** | **225,017** | **82,042** | **2,024,996** | **2,737,155** |

ກະກຽມໂດຍ:

ທ່ານ Zhou Junyu
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານນາງ Li Shuping
ຜູ້ຈັດການ

ນະຄອນຫຼວງວຽງຈັນ, ສປປ ລາວ
9 ເມສາ 2026

## ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ ສາຂານະຄອນຫຼວງວຽງຈັນ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025

| *ລາຍການ* | *ບົດອະທິບາຍ ເລກທີ* | *2025 ລ້ານກີບ* | *2024 ລ້ານກີບ* |
|---|---|---|---|
| **ກິດຈະກຳການດຳເນີນງານ** | | | |
| **ກຳໄລສຸດທິກ່ອນອາກອນ** | | **524,488** | **487,467** |
| *ດັດແກ້ສຳລັບ:* | | | |
| ລາຍຈ່າຍຄ່າຫຼູ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 15 | 7,329 | 3,396 |
| ລາຍຈ່າຍ(ເກັບຄືນ) ເງິນແຮສຳລັບຂາດທຶນສິນເຊື່ອ | 13.2 | (24,470) | 27,323 |
| ກຳໄລຈາກອັດຕາແລກປ່ຽນທີ່ເກີດຈາກການຕີມູນຄ່າຄືນໃຫມ່ຂອງ ບັນຊີການເງິນທີ່ເປັນສະກຸນເງິນຕ່າງປະເທດ | 5 | (106,722) | (175,479) |
| ລາຍຮັບດອກເບ້ຍ | | (740,099) | (687,395) |
| ລາຍຈ່າຍດອກເບ້ຍ | | 249,458 | 270,319 |
| (ເພີ່ມຂຶ້ນ)/ຫຼຸດລົງຂອງຊັບສິນຈາກການດຳເນີນງານ | | | |
| ເງິນຝາກຢູ່ທະນາຄານອື່ນ | | (2,913,747) | 560,362 |
| ເງິນກູ້ໃຫ້ແກ່ລູກຄ້າ | | (536,315) | (2,477,744) |
| ເງິນກູ້ໃຫ້ແກ່ບໍລິສັດແມ່ | | 3,334,626 | 1,004,815 |
| ຊັບສິນອື່ນໆ | | (17) | (803) |
| ເພີ່ມຂຶ້ນ/(ຫຼຸດລົງ)ຂອງໜີ້ສິນຈາກການດຳເນີນງານ | | | |
| ເງິນຝາກຢູ່ທະນາຄານອື່ນ | | (749,469) | (1,398,468) |
| ເງິນຝາກລູກຄ້າ | | 872,262 | 1,953,627 |
| ໜີ້ສິນອື່ນໆ | | (96,271) | (149,319) |
| ອາກອນກຳໄລທີ່ຊຳລະພາຍໃນປີ | 22.2 | (72,064) | (81,972) |
| ດອກເບ້ຍທີ່ໄດ້ຮັບ | | 738,202 | 727,747 |
| ດອກເບ້ຍທີ່ໄດ້ຈ່າຍ | | (267,960) | (224,271) |
| **ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ** | | **219,231** | **(160,395)** |
| **ກິດຈະກຳດ້ານການລົງທຶນ** | | | |
| ການຊື້ຊັບສົມບັດ ແລະ ອຸປະກອນ | 16 | (15,006) | (7,029) |
| ການຈ່າຍເພື່ອຊື້ສິດໃນການນຳໃຊ້ຊັບສິນ | | (463,567) | (132,000) |
| **ກະແສເງິນສົດສຸດທິໃຊ້ໃນກິດຈະກຳດ້ານການລົງທຶນ** | | **(478,573)** | **(139,029)** |
| **ກິດຈະກຳທາງການເງິນ** | | | |
| **ກະແສເງິນສົດສຸດທິໃຊ້ໃນກິດຈະກຳດ້ານການເງິນ** | | - | - |

ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ ສາຂານະຄອນຫຼວງວຽງຈັນ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025

| *ລາຍການ* | *ບົດອະທິບາຍ ເລກທີ* | *2025 ລ້ານກີບ* | *2024 ລ້ານກີບ* |
|---|---|---|---|
| **ປ່ຽນແປງສຸດທິໃນເງິນສົດ ແລະ ທຽບເທົ່າເງິນສົດ** | | **(259,342)** | **(299,424)** |
| **ເງິນສົດ ແລະ ທຽບເທົ່າເງິນສົດນະຕົ້ນປີ** | | **2,338,417** | **2,637,841** |
| **ເງິນສົດ ແລະ ທຽບເທົ່າເງິນສົດນະທ້າຍປີ** | **25** | **2,079,075** | **2,338,417** |

ກະກຽມໂດຍ:

ທ່ານ Zhou Junyu
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານນາງ Li Shuping
ຜູ້ຈັດການ

ນະຄອນຫຼວງວຽງຈັນ, ສປປ ລາວ

9 ເມສາ 2026

## 1. ຂໍ້ມູນກ່ຽວກັບທະນາຄານ

*ການສ້າງຕັ້ງ ແລະ ການເຄື່ອນໄຫວ*

ທະນາຄານ ແຫ່ງປະເທດຈີນ (ຮົງກົງ) ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ (“ສາຂາ”) ແມ່ນສາຂາຂອງທະນາຄານ ແຫ່ງປະເທດຈີນ (ຮົງກົງ) ຈຳກັດທີ່ສ້າງຕັ້ງໃນ ສປປ ລາວ ແລະ ດຳເນີນກິດຈະການພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານສະບັບເລກທີ 01/ທຫລ ທີ່ອອກໂດຍ ທະນາຄານແຫ່ງ ສປປ ລາວ (“ທຫລ”) ໃນວັນທີ 13 ມັງກອນ 2020.

ທຶນຈົດທະບຽນເບື້ອງຕົ້ນຂອງສາຂາແມ່ນ 405,100,000,000 ກີບ. ທຶນຈົດທະບຽນທີ່ໄດ້ຖອກແລ້ວ ນະວັນທີ 31 ທັນວາ 2025 ແມ່ນ 405,100,000,000 ກີບ.

ກິດຈະກຳຫຼັກຂອງສາຂາແມ່ນໃຫ້ການບໍລິການລະດົມທຶນ ແລະ ສະໜອງເງິນກູ້ເພື່ອການປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ເສດຖະກິດຂອງລາວ.

*ຄະນະບໍລິຫານ*

ສະມາຊິກຄະນະບໍລິຫານພາຍໃນປີທີ່ສິ້ນສຸດ 31 ທັນວາ 2025 ແລະ ນະວັນທີອອກບົດລາຍງານການເງິນສະບັບນີ້ ລວມມີທ່ານນາງ Li Shuping.

*ທີ່ຕັ້ງ*

ສາຂາຕັ້ງຢູ່ ຕຶກວຽງຈັນເຊັນເຕີ, ຖະໜົນ ຄູວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

*ພະນັກງານ*

ພະນັກງານທັງໝົດຂອງສາຂາ ນະວັນທີ 31 ທັນວາ 2025 ແມ່ນມີ 72 ຄົນ (31 ທັນວາ 2024: 67 ຄົນ).

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

### *2.1. ຄຳຖະແຫຼງຕາມລະບຽບການ*

ຄະນະບໍລິຫານຂອງສາຂາຂໍຖະແຫຼງວ່າ ເອກະສານລາຍງານການເງິນແມ່ນຖືກກະກຽມ ໂດຍສອດຄ່ອງກັບກົດໝາຍການບັນຊີຂອງ ສປປ ລາວ ແລະ ບັນດາລະບຽບການທີ່ອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມເອກະສານລາຍງານການເງິນ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.2. *ພື້ນຖານໃນການກະກຽມ*

ສາຂາບັນທຶກເປັນເງິນກີບ (LAK) ແລະ ໄດ້ກະກຽມລາຍງານການເງິນເປັນລ້ານກີບ (ລ້ານກີບ) ຕາມຄຳສັ່ງເລກທີ 02/PR ຂອງນາຍົກລັດຖະມົນຕີ ລົງວັນທີ 22 ມີນາ 2000 ແລະ ກົດໝາຍບັນຊີຂອງປະເທດລາວ ແລະ ລະບຽບການທີ່ກຳນົດໄວ້ຂອງທະນາຄານແຫ່ງປະເທດລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການສະເໜີລາຍງານການເງິນ ("LAS").

ລາຍງານການເງິນທີ່ກ່ຽວຂ້ອງໄດ້ຖືກຈັດຕຽມໂດຍໃຊ້ຫຼັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດການລາຍງານທີ່ຍອມຮັບທົ່ວໄປໃນປະເທດລາວ. ດັ່ງນັ້ນ, ໃບລາຍງານກຳໄລ ແລະ ການສູນເສຍ, ໃບລາຍງານສະຖານະພາບການເງິນ, ໃບລາຍງານການປ່ຽນແປງຂອງຊັບສິນ, ໃບລາຍງານການເງິນ ແລະ ບັນທຶກດັ່ງກ່າວບໍ່ໄດ້ຖືກອອກແບບສຳລັບຜູ້ທີ່ບໍ່ໄດ້ຮັບຂໍ້ມູນກ່ຽວກັບຫຼັກການ, ຂັ້ນຕອນ ແລະ ການປະຕິບັດທາງດ້ານບັນຊີຂອງປະເທດລາວ, ແລະ ນອກຈາກນັ້ນ ບໍ່ໄດ້ມີເຈດຕະນາທີ່ຈະສະເໜີສະພາບການເງິນຂອງສາຂາ ແລະ ຜົນການດຳເນີນງານ ແລະ ການດຳເນີນການຂອງສາຂາ ຕາມຫຼັກການ ແລະ ການປະຕິບັດທາງດ້ານບັນຊີ ທີ່ຍອມຮັບທົ່ວໄປໃນປະເທດອື່ນຫຼາຍກວ່າປະເທດລາວ.

*ການລາຍງານການເງິນໃນເສດຖະກິດທີ່ມີພາວະເງິນເຟີ້ລະດັບສູງສຸດ*

ໃນປີ 2024, ເສດຖະກິດຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ປະເທດລາວ) ໄດ້ຖືກຮັບຮອງວ່າເປັນເສດຖະກິດທີ່ມີອັດຕາເງິນເຟີ້ລະດັບສູງເນື່ອງຈາກບັນລຸຕາມເງື່ອນໄຂທີ່ກຳນົດໃນມາດຕະຖານ IAS 29 "ການລາຍງານການເງິນໃນເສດຖະກິດທີ່ມີອັດຕາເງິນເຟີ້ລະດັບສູງ". ເຖິງຢ່າງໃດກໍຕາມ ສາຂາບໍ່ໄດ້ນຳໃຊ້ນະໂຍບາຍການບັນຊີໃດໆເພື່ອຮອງຮັບຜົນກະທົບຂອງການເງິນເຟີ້ລະດັບສູງ ໃນຂະນະທີ່ລໍຖ້າຄຳແນະນຳຈາກທະນາຄານແຫ່ງ ສປປ ລາວ (BOL). ເລີ່ມຕັ້ງແຕ່ວັນທີ 1 ມັງກອນ 2025 ເປັນຕົ້ນໄປ ເສດຖະກິດຂອງລາວບໍ່ຖືກພິຈາລະນາເປັນເສດຖະກິດທີ່ມີອັດຕາເງິນເຟີ້ລະດັບສູງອີກຕໍ່ໄປ. ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025 ສາຂາໄດ້ກະກຽມເອກະສານລາຍງານການເງິນປະຈຳປີຂອງຕົນຕາມກົດໝາຍການບັນຊີຂອງ ສປປ ລາວ ແລະ ຕາມກົດລະບຽບທີ່ ທຫລ ກຳນົດ ("LAS") ໂດຍເລືອກທີ່ຈະບໍ່ນຳໃຊ້ມາດຕະຖານ IAS 29.

***ປີການບັນຊີ***

ປີການບັນຊີຂອງສາຂາແມ່ນເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດວັນທີ 31 ທັນວາ.

### 2.3. *ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ*

ລາຍຮັບ ແລະ ລາຍຈ່າຍດອກເບ້ຍ ແມ່ນຮັບຮູ້ໃນໃບລາຍງານຜົນການດຳເນີນງານ ໂດຍພື້ນຖານຄ້າງຮັບຄ້າງຈ່າຍ ໂດຍນຳໃຊ້ແບບວິທີແບບເສັ້ນຊື່ ແລະ ບັນດາອັດຕາດອກເບ້ຍແມ່ນໄດ້ລະບຸຢູ່ໃນ ສັນຍາການຝາກເງິນ/ການກູ້ຢືມເງິນ ກັບບັນດາລູກຄ້າ.

ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ

ຕົ້ນທຶນຄ່າເສື່ອມຄືຈຳນວນເງິນທີ່ຊັບສິນທາງການເງິນທີ່ຖືກວັດແທກຕອນຮັບຮູ້ເບື້ອງຕົ້ນລົບກັບການຊຳລະຄືນເງິນຕົ້ນທຶນ, ບວກ ຫຼື ລົບດ້ວຍຄ່າເສື່ອມສະສົມ ໂດຍການໃຊວິທີການຄິດໄລ່ແບບ ໃຊ້ອັດຕາມດອກເບ້ຍທີ່ແທ້ຈິງ ຂອງສ່ວນຕ່າງລະຫວ່າງຈຳນວນເງິນທີ່ຮັບຮູ້ເບື້ອງຕົ້ນ ແລະ ຈຳນວນໃນມື້ຄົບກຳນົດ ແລະ ສຳລັບຊັບສິນທາງການເງິນທີ່ຖືກດັດປັບດ້ວຍຄ່າເສື່ອມມູນຄ່າ.

**2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

***2.3. ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ** (ຕໍ່)*

ດອກເບ້ຍທີ່ແທ້ຈິງ ແມ່ນ ອັດຕາທີ່ໃຊ້ໃນການຫຼຸດຈາກການປະມານການການຊຳລະເງິນສົດ ແລະ ການຮັບໃນອະນາຄົດທີ່ຄາດວ່າຈະເກີດຂຶ້ນຕະຫຼອດອາຍຸການຂອງຊັບສິນທາງການເງິນ ຫຼື ໜີ້ສິນທາງການເງິນໃຫ້ເຫຼືອມູນຄ່າຕາມບັນຊີຂອງຊັບສິນທາງການເງິນ (ກ່າວເຖິງ ຕົ້ນທຶນຄ່າເສື່ອມກ່ອນສູນເສຍມູນຄ່າ) ຫຼື ໃຫ້ເຫຼືອຕົ້ນທຶນຄ່າເສື່ອມຂອງໜີ້ສິນທາງການເງິນ. ການຄິດໄລ່ບໍ່ໄດ້ຄຳນຶງເຖິງການສູນເສຍມູນຄ່າ ທີ່ຄາດວ່າຈະເກີດຂຶ້ນ ລວມເຖິງ ທຸລະກຳທີ່ຖືເປັນຕົ້ນທຶນ, ຄ່າທຳນຽມ ຫຼື ສ່ວນຫຼຸດ, ຄ່າໃຊ້ຈ່າຍ ແລະ ຄະແນນທີ່ຈ່າຍ ຫຼື ໄດ້ຮັບ ເຊິ່ງເປັນວ່ນໜຶ່ງຂອງອັດຕາດອກເບ້ຍທີ່ແທ້ຈິງ ເຊັ່ນ ຄ່າທຳນຽມໃນການຈັດທຳ, ເມື່ອຄຳນວນ ອັດຕາດອກເບ້ຍທີ່ແທ້ຈິງ, ທະນາຄານຈະປະມານການກະແສເງິນສົດໂດຍພິຈາລະນາເງື່ອນໄຂຕາມສັນຍາຂອງເຄື່ອງມືທາງການເງິນ ແຕ່ບໍ່ໄດ້ມີການພິຈາລະນາເຖິງການສູນເສຍມູນຄ່າໃນອະນາຄົດ.

ເມື່ອສາຂາແກ້ໄຂການປະມານການກະແສເງິນສົດໃນອະນາຄົດ, ,ມູນຄ່າຕາມບັນຊີຂອງຊັບສິນທາງການເງິນ ຫຼື ໜີ້ສິນທາງການເງິນທີ່ກ່ຽວຂ້ອງຈະໄດ້ຮັບການປັບໃຫ້ສະທ້ອນເຖິງການປະມານການໃໝ່ທີ່ຫັກຫຼຸດການນຳໃຊ້ດອກເບ້ຍທີ່ແທ້ຈິງເດີມ ການປ່ຽນແປງໃດໆ ຈະໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

ສາຂາຄິດໄລ່ລາຍຮັບດອກເບ້ຍຂອງຊັບສິນທາງການເງິນ ອື່ນໆນອກເໜືອຈາກຊັບສິນທີ່ຖືວ່າສູນເສຍມູນຄ່າ ໂດຍນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງ ມາໃຊ້ກັບມູນຄ່າຕາມບັນຊີລວມຂອງຊັບສິນທາງການເງິນ ຄ່າໃຊ້ຈ່າຍດອກເບ້ຍຍັງຄຳນວນໂດຍໃຊ້ວິທີ ອັດຕາດອກເບ້ຍທີ່ແທ້ຈິງ ສຳລັບໜີ້ສິນທາງການເງິນທັງໝົດທີ່ຖືຄອງຕາມຕົ້ນທຶນຄ່າເສື່ອມມູນຄ່າ.

ເມື່ອຊັບສິນທາງການເງິນໄດ້ຮັບການສູນເສຍມູນຄ່າ ແລະ ຖືເປັນ ໄລຍະທີ 3 ສາຂາຈະຄິດໄລ່ລາຍຮັບດອກເບ້ຍໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງປໃຊ້ກັບຕົ້ນທຶນຄ່າເສື່ອມມູນຄ່າສຸດທິຂອງຊັບສິນທາງການເງິນ ຫາກຊັບສິນທາງການເງິນໄດ້ຮັບການແກ້ໄຂ (ອະທິບາຍໃນເອກະສານຊ້ອງທ້າຍເລກທີ 2.7 ສຳລັບຄວາມໝາຍຂອງໜີ້ສິນທີ່ບໍ່ເກີດດອກອອກຜົນ) ແລະ ບໍ່ໄດ້ຖືກຫັກຄ່າສູນເສຍມູນຄ່າ, ສາຂາຈະກັບໄປຄຳນວນລາຍຮັບດອກເບ້ຍຕາມຕົ້ນທຶນເສື່ອມມູນຄ່າ.

***2.4. ການຮັບຮູ້ຄ່າທຳນຽມ ແລະ ຄ່າບໍລິການ***

ຄ່າທຳນຽມ ແລະ ຄ່າບໍລິການ ແມ່ນປະກອບດ້ວຍບັນດາຄ່າທຳນຽມທີ່ໄດ້ຮັບຈາກການໂອນເງິນ (ລວມທັງການຊຳລະສະສາງທາງການຄ້າ), ຄ່າທຳນຽມທີ່ໄດ້ຮັບຈາກບັນດາທຸລະກຳການແລກປ່ຽນເງິນຕາຕ່າງປະເທດ ແລະ ຄ່າທຳນຽມທີ່ໄດ້ຮັບຈາກການຄ້ຳປະກັນທາງດ້ານການເງິນ.

ບັນດາຄ່າທຳນຽມ ແລະ ຄ່າບໍລິການ ແມ່ນໄດ້ຖືກຮັບຮູ້ລົງໃນໃບລາຍງານຜົນການດຳເນີນງານ ບົນພື້ນຖານເງິນສົດ.

**2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

***2.5. ເງິນສົດ ແລະ ທຽບເທົ່າເງິນສົດ***

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງໂດຍມີອາຍຸຄົບກຳນົດຕໍ່າກວ່າ 30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໃນຈຳນວນທີ່ຮູ້ໄດ້ ແລະ ບັນຊີໜີ້ຕ້ອງຮັບຈາກທະນາຄານອື່ນທີ່ມີອາຍຸຄົບກຳນົດຕໍ່າກວ່າ 30 ວັນ.

***2.6. ເງິນກູ້ໃຫ້ລູກຄ້າ***

ເງິນກູ້ໃຫ້ລູກຄ້າແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດເຫຼືອທ້າຍລົບໃຫ້ເງິນແຮສະເພາະສຳລັບເງິນກູ້ນະທ້າຍປີ.

***2.7. ເງິນແຮຂອງກິດຈະກຳສິນເຊື່ອ***

ສາຂາໄດ້ສົ່ງຈົດໝາຍເຖິງ ທຫລ ເອກະສານອ້າງອີງ ເລກທີ BOC/2020/161 ລົງວັນທີ 25 ກຸມພາ 2020 ເພື່ອຂໍອະນຸຍາດນາໃຊ້ການຫັກເງິນແຮຂອງເງິນກູ້ໃຫ້ແກ່ລູກຄ້າຂອງຕົນ ຕາມ IFRS 9 ທີ່ລະບຸໄວ້ໃນຄູ່ມືສິນເຊື່ອຂອງຕົນ.

ສາຂາໄດ້ຮັບຈົດໝາຍຕອບຮັບຈາກ ທຫລ ອີງຕາມແຈ້ງການເລກທີ 152/ກທຂ ("ທຫລ") ລົງວັນທີ 01 ເມສາ 2020 ຈາກກົມຄຸ້ມຄອງທະນາຄານທຸລະກິດ ແຫ່ງ ສປປ ລາວ, ອະນຸຍາດໃຫ້ສາຂານຳໃຊ້ການຫັກເງິນແຮຂອງເງິນກູ້ໃຫ້ແກ່ລູກຄ້າຕາມ IFRS 9 ສຳລັບເງິນກູ້ໃຫ້ແກ່ລູກຄ້າ.

ແບບຈຳລອງການຮັບຮູ້ຜົນການຂາດທຶນທາງສິນເຊື່ອທີ່ຄາດວ່າຈະເກີດຂຶ້ນ (*'ECL'*)

ສາຂາໄດ້ປະເມີນບົນພື້ນຖານການຄາດການລ່ວງໜ້າກ່ຽວກັບການຮັບຮູ້ຜົນການຂາດທຶນທາງສິນເຊື່ອທີ່ຄາດວ່າຈະເກີດຂຶ້ນ ('ECL') ທີ່ກ່ຽວພັນກັບເຄື່ອງມືໜີ້ສິນໃນການຕັດຕົ້ນທຶນຫນີ້. ສາຂາຮັບຮູ້ເງິນແຮຂາດທຶນທາງສິນເຊື່ອໃນແຕ່ລະວັນ ຊຶ່ງການວັດແທກ ECL ສະທ້ອນໃຫ້ເຫັນ:

- ຈຳນວນທີ່ບໍ່ຜິດດ່ຽງ ແລະ ນໍ້າໜັກຄວາມເປັນໄປໄດ້ທີ່ຖືກກຳນົດໂດຍການປະເມີນຂອບເຂດຂອງຜົນໄດ້ຮັບທີ່ເປັນໄປໄດ້;
- ມູນຄ່າເງິນຕາມເວລາ ແລະ,
- ຂໍ້ມູນທີ່ສົມເຫດສົມຜົນ ແລະ ສາມາດຮອງຮັບໄດ້ ໂດຍບໍ່ມີຄ່າໃຊ້ຈ່າຍ ຫຼື ຄວາມພະຍາຍາມທີ່ເກີນຄວນໃນວັນທີລາຍງານກ່ຽວກັບເຫດການທີ່ຜ່ານມາ, ສະພາບປັດຈຸບັນ ແລະ ການຄາດຄະເນຂອງສະພາບເສດຖະກິດໃນອະນາຄົດ.

*ການຄິດໄລ່*

ECL ແມ່ນຄ່າສະເລ່ຍທີ່ມີນໍ້າຫນັກຂອງການຂາດທຶນທາງສິນເຊື່ອໃນເຄື່ອງມືທາງດ້ານການເງິນ ໂດຍການຊັ່ງຊານໍ້າຫນັກຄວາມສ່ຽງຕໍ່ການຜິດນັດຊຳລະ. ການຂາດທຶນທາງສິນເຊື່ອ ແມ່ນຄວາມແຕກຕ່າງລະຫວ່າງກະແສເງິນສົດຕາມສັນຍາທັງໝົດທີ່ ສາຂາຈະຕ້ອງໄດ້ຊຳລະຕາມສັນຍາ ແລະ ກະແສເງິນສົດທັງໝົດທີ່ສາຂາຄາດວ່າຈະໄດ້ຮັບ ໂດຍນຳໃຊ້ສ່ວນຫຼຸດໃນອັດຕາດອກເບ້ຍເດີມ ເຊັ່ນ: ມູນຄ່າປັດຈຸບັນຂອງການຂາດແຄນເງິນສົດທັງໝົດ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.7. *ເງິນແຮຂອງກິດຈະກຳສິນເຊື່ອ* (ຕໍ່)

ອີງຕາມການປ່ຽນແປງຄວາມສ່ຽງດ້ານສິນເຊື່ອຂອງເຄື່ອງມືທາງດ້ານການເງິນນັບຕັ້ງແຕ່ການຮັບຮູ້ເບື້ອງຕົ້ນ, ສາຂາຈະຄິດໄລ່ ECL ໂດຍສາມຂັ້ນ ດັ່ງນີ້:

- ຂັ້ນທີ 1: ເຄື່ອງມືທາງດ້ານການເງິນທີ່ບໍ່ມີການເພີ່ມຂຶ້ນຢ່າງເປັນສາລະສຳຄັນ ນັບຕັ້ງແຕ່ການຮັບຮູ້ເບື້ອງຕົ້ນໃນຄວາມສ່ຽງດ້ານສິນເຊື່ອ ແມ່ນຈະລວມຢູ່ໃນ ຂັ້ນທີ 1 ເພື່ອຄິດໄລ່ເງິນແຮຕາມຈຳນວນທີ່ເທົ່າກັບ ECL ຂອງເຄື່ອງມືທາງດ້ານການເງິນສຳລັບ 12 ເດືອນຕໍ່ໄປ;
- ຂັ້ນທີ 2: ເຄື່ອງມືທາງດ້ານການເງິນທີ່ຄວາມສ່ຽງເພີ່ມຂຶ້ນຢ່າງເປັນສາລະສຳຄັນ ນັບຕັ້ງແຕ່ການຮັບຮູ້ເບື້ອງຕົ້ນໃນຄວາມສ່ຽງດ້ານສິນເຊື່ອ ແຕ່ບໍ່ມີຫຼັກຖານທີ່ເປັນຮູບປະທຳຂອງການດ້ອຍຄ່າແມ່ນຈະລວມໃນຂັ້ນທີ 2 ໂດຍການຄິດໄລ່ເງິນແຮຕາມຈຳນວນທີ່ເທົ່າກັບ ECL ຕະຫຼອດອາຍຸຂອງເຄື່ອງມືທາງດ້ານການເງິນ;
- ຂັ້ນທີ 3: ຊັບສິນທາງການເງິນທີ່ມີຫຼັກຖານການດ້ອຍຄ່າ ນະວັນທີ່ໄດ້ມີການລາຍງານທາງການເງິນ ແມ່ນຈະລວມໃນຂັ້ນທີ 3 ໂດຍການຄິດໄລ່ເງິນແຮຕາມຈຳນວນທີ່ເທົ່າກັບ ECL ຕະຫຼອດຂອງອາຍຸເຄື່ອງມືທາງດ້ານການເງິນ.

*ການຄິດໄລ່*

ໃນຮອບປີການບັນຊີທີ່ຜ່ານມາ ເງິນແຮຂອງເຄື່ອງມືທາງດ້ານການເງິນໄດ້ຄິດໄລ່ໂດຍອີງໃສ່ ECL ເຄື່ອງມືຕະຫຼອດອາຍຸ ແລະ ນະວັນທີ່ໄດ້ມີການລາຍງານທາງການເງິນປັດຈຸບັນ ຈະບໍ່ຖືວ່າເຄື່ອງມືທາງການເງິນດັ່ງກ່າວປະສົບບັນຫາທີ່ເປັນສາລະ ສຳຄັນຕໍ່ໄປ, ຄວາມສ່ຽງດ້ານສິນເຊື່ອແມ່ນ ເພີ່ມຂຶ້ນຕັ້ງແຕ່ການຮັບຮູ້ຕັ້ງແຕ່ທຳອິດ ສາຂາຄິດໄລ່ເງິນແຮຂອງເຄື່ອງມືທາງດ້ານ ການເງິນນະວັນທີ່ໄດ້ມີການລາຍງານທາງການເງິນ ໂດຍນຳໃຊ້ ECL ຂອງເຄື່ອງມືທາງດ້ານການເງິນສຳລັບ 12 ເດືອນຕໍ່ໄປ.

ເມື່ອຄິດໄລ່ ECL, ນິຕິບຸກຄົນບໍ່ຈຳເປັນຕ້ອງກຳນົດທຸກສະຖານະການທີ່ເປັນໄປໄດ້. ແຕ່ເຖິງຢ່າງໃດກໍ່ຕາມ, ສາຂາ ພິຈາລະນາຄວາມສ່ຽງຫຼືຄວາມເປັນໄປໄດ້ທີ່ເງິນກູ້ຈະບໍ່ເກີດດອກອອກຜົນ ແລະ ຄວາມເປັນໄປໄດ້ທີ່ຈະບໍ່ເກີດເງິນກູ້ທີ່ ບໍ່ເກີດດອກອອກຜົນ ຊຶ່ງອາດຈະມີຄວາມເປັນໄປໄດ້ຕໍ່າກໍ່ຕາມ.

ສາຂາໄດ້ດຳເນີນການປະເມີນຜົນຂອງ ECL ອີງຕາມຂໍ້ມູນລ່ວງຫນ້າ ໂດຍນຳໃຊ້ຄືວແບບ ແລະ ການສົມມຸດຕິຖານຈຳນວນຫນຶ່ງໃນການຄິດໄລ່ການຂາດທຶນທາງສິນເຊື່ອທີ່ຄາດວ່າຈະເກີດຂຶ້ນ. ແບບຈຳລອງ ແລະ ການຕັ້ງສົມມຸດຕິຖານເຫຼົ່ານີ້ກ່ຽວຂ້ອງກັບເງື່ອນໄຂເສດຖະກິດມະຫາພາກໃນອະນາຄົດ ແລະ ມູນຄ່າສິນເຊື່ອຂອງຜູ້ກູ້ຢືມ (ເຊັ່ນ: ຄວາມເປັນໄປໄດ້ທີ່ລູກຄ້າຈະຜິດນັດຊຳລະ ແລະ ການສູນເສຍທີ່ກ່ຽວຂ້ອງ). ສາຂານຳໃຊ້ດຸນພິນິດ, ການສົມມຸດຕິຖານ ແລະ ເຕັກນິກການຄາດຄະເນເພື່ອຄິດໄລ່ ECL ຕາມຂໍ້ກຳນົດຂອງມາດຕະຖານການບັນຊີເຊັ່ນ:

- ເງື່ອນໄຂໃນການກຳນົດຄວາມສ່ຽງດ້ານສິນເຊື່ອເພີ່ມຂຶ້ນຢ່າງເປັນສາລະສຳຄັນ
- ນິຍາມຂອງຊັບສິນທາງການເງິນທີ່ຜິດນັດຊຳລະ ແລະ ການດ້ອຍຄ່າຂອງສິນເຊື່ອ
- ພາລາມິດເຕີ້ສຳລັບວັດແທກຄ່າຂອງ ECL
- ຂໍ້ມູນທີ່ເປັນການຄາດການລ່ວງໜ້າ
- ການປັບປ່ຽນກະແສເງິນສົດຕາມສັນຍາ
- ການຈັດກຸ່ມເຄື່ອງມືທາງການເງິນສຳລັບຜົນຂາດທຶນທີ່ຄິດໄລ່ໂດຍລວມ

**2. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ** (ຕໍ່)

**2.7.** ***ເງິນແຮຂອງກິດຈະກໍາສິນເຊື່ອ*** (ຕໍ່)

*ເງື່ອນໄຂໃນການກໍານົດຄວາມສ່ຽງດ້ານສິນເຊື່ອທີ່ເພີ່ມຂຶ້ນຢ່າງເປັນສາລະສໍາຄັນ*

ສາຂາປະເມີນວ່າຄວາມສ່ຽງດ້ານສິນເຊື່ອຂອງເຄື່ອງມືທາງດ້ານການເງິນທີ່ກ່ຽວຂ້ອງໄດ້ເພີ່ມຂຶ້ນຢ່າງເປັນສາລະສໍາຄັນ ຕັ້ງແຕ່ການຮັບຮູ້ເບື້ອງຕົ້ນໃນແຕ່ລະວັນທີ່ລາຍງານການເງິນ. ໃນຂະນະທີ່ການກໍານົດວ່າຄວາມສ່ຽງດ້ານສິນເຊື່ອໄດ້ເພີ່ມຂຶ້ນຢ່າງເປັນສາລະສໍາຄັນຕັ້ງແຕ່ການຮັບຮູ້ໃນເບື້ອງຕົ້ນຫຼືບໍ່ນັ້ນ ສາຂາຈະພິຈາລະນາເຖິງຂໍ້ມູນທີ່ສົມເຫດສົມຜົນ ແລະ ການສະໜັບສະໜູນດັ່ງກ່າວ ບໍ່ມີຄ່າໃຊ້ຈ່າຍ ຫຼື ຄວາມພະຍາຍາມທີ່ບໍ່ເໝາະສົມ ລວມທັງການວິເຄາະດ້ານຄຸນນະພາບ ແລະ ປະລິມານ ໂດຍອີງໃສ່ຂໍ້ມູນໃນອາດີດຂອງສາຂາ, ສິນເຊື່ອພາຍນອກ, ລະດັບຄວາມສ່ຽງ ແລະ ຂໍ້ມູນທີ່ເປັນການຄາດຄະເນລ່ວງໜ້າ ຕາມເຄື່ອງມືທາງການເງິນສ່ວນບຸກຄົນ ຫຼື ກຸ່ມຂອງເຄື່ອງມືທາງການເງິນທີ່ມີລັກສະນະຄວາມສ່ຽງດ້ານສິນເຊື່ອຮ່ວມກັນ ສາຂາຈະສົມທຽບຄວາມສ່ຽງຈາກການຜິດນັດຊໍາລະໜີ້ຂອງເຄື່ອງມືທາງການເງິນ ນະວັນທີ່ລາຍງານການເງິນ ແລະ ນະວັນທີ່ຮັບຮູ້ໃນເບື້ອງຕົ້ນ ເພື່ອຄໍານວນການປ່ຽນແປງຂອງຄວາມສ່ຽງທີ່ຜິດນັດ ໃນຊ່ວງອາຍຸທີ່ຄາດຫວັງຂອງເຄື່ອງມືທາງການເງິນ.

ສາຂາພິຈາລະນາເຄື່ອງມືທາງດ້ານການເງິນ ວ່າມີຄວາມສ່ຽງດ້ານສິນເຊື່ອທີ່ເພີ່ມຂຶ້ນຢ່າງເປັນສາລະສໍາຄັນ ເມື່ອເປັນໄປຕາມເກນທາງດ້ານ ປະລິມານ, ຄຸນນະພາບ ຫຼື Backstop ຢ່າງນ້ອຍໜຶ່ງຂໍ້ດັ່ງຕໍ່ໄປນີ້:

*ເງື່ອນໄຂທາງດ້ານປະລິມານ*

- ນະວັນທີ່ລາຍງານ ຄວາມໜ້າຈະເປັນໄປໄດ້ໃນການຜິດສັນຍາ ຕະຫຼອດອາຍຸຄົງເຫຼືອທີ່ເປັນສາລະສໍາຄັນ ເມື່ອປຽບທຽບກັບການຮັບຮູ້ຄັ້ງທໍາອິດ.

*ເງື່ອນໄຂທາງດ້ານຄຸນນະພາບ*

- ການປ່ຽນແປງໄປທາງດ້ານລົບ ທີ່ເປັນສາລະສໍາຄັນໃນການດໍາເນີນງານ ຫຼື ສະຖານະທາງການເງິນຂອງລູກໜີ້
- ຈັດປະເພດເປັນສິນເຊື່ອ ໃນເງິນກູ້ຫ້າປະເພດ
- ຢູ່ໃນລາຍການເຝົ້າຕິດຕາມ

*ເງື່ອນໄຂທາງດ້ານ Backstop*

- ການຊໍາລະເງິນຕາມສັນຍາຂອງລູກໜີ້ (ລວມເງິນຕົ້ນ ແລະ ດອກເບ້ຍ) ເກີນກໍານົດຊໍາລະ 30 ມື້

*ຄໍານິຍາມຂອງຊັບສິນທາງດ້ານການເງິນ ທີ່ຜິດນັດ ແລະ ການດ້ອຍຄ່າຂອງສິນເຊື່ອ*

ສາຂາພິຈາລະນາເຄື່ອງມືທາງດ້ານການເງິນເປັນຄ່າເລີ່ມຕົ້ນເມື່ອມັນມີຄວາມບົກຜ່ອງດ້ານສິນເຊື່ອ. ມາດຕະຖານທີ່ໄດ້ຮັບຮອງເອົາໂດຍສາຂາເພື່ອກໍານົດວ່າຊັບສິນທາງດ້ານການເງິນມີຄວາມບົກຜ່ອງດ້ານສິນເຊື່ອ ແມ່ນສອດຄ່ອງກັບຈຸດປະສົງການຄຸ້ມຄອງຄວາມສ່ຽງດ້ານສິນເຊື່ອພາຍໃນ ໂດຍຄໍານຶງເຖິງເງື່ອນໄຂດ້ານປະລິມານ ແລະ ຄຸນນະພາບ. ເມື່ອສາຂາປະເມີນວ່າຄວາມບົກຜ່ອງດ້ານສິນເຊື່ອເກີດຂຶ້ນ, ປັດໃຈຕໍ່ໄປນີ້ແມ່ນພິຈາລະນາເປັນຕົ້ນ:

- ບັນຫາທາງການເງິນຂອງຜູ້ໃຫ້ກູ້ ຫຼື ຜູ້ຜູກມັດ;
- ການຜິດສັນຍາ ເຊັ່ນ: ການຜິດນັດ ຫຼື ການກະທໍາຜິດໃນເລື່ອງຂອງດອກເບ້ຍ ຫຼື ເງິນຕົ້ນ;
- ສາຂາປ່ອຍກູ້ໃຫ້ລູກຄ້າດ້ວຍເຫດຜົນທາງເສດຖະກິດ ຫຼື ທາງກົດໝາຍທີ່ກ່ຽວກັບຄວາມຫຍຸ້ງຍາກທາງດ້ານການເງິນຂອງຜູ້ກູ້ຢືມ, ການສໍາປະທານທີ່ຜູ້ໃຫ້ກູ້ຈະບໍ່ພິຈາລະນາເປັນຢ່າງອື່ນ;
- ມີຄວາມເປັນໄປໄດ້ສູງ ວ່າຜູ້ກູ້ຢືມຈະລົ້ມລະລາຍ ຫຼື ການປັບປຸງໂຄງສ້າງທາງການເງິນອື່ນໆ;
- ການຫາຍໄປຂອງຕະຫຼາດທີ່ໃຊ້ງານຢູ່ຂອງສິນຊັບທາງການເງິນ ເນື່ອງຈາກບັນຫາທາງການເງິນ;

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.7. *ເງິນແຮຂອງກິດຈະກຳສິນເຊື່ອ* (ຕໍ່)

- ການຊື້ ຫຼື ການສ້າງສິນຊັບທາງການເງິນທີ່ມີສ່ວນຫຼຸດຫຼາຍ ຊຶ່ງສະທ້ອນເຖິງການສູນເສຍສິນເຊື່ອທີ່ເກີດຂຶ້ນ;
- ລູກໜີ້ຄ້າງຊຳລະເກີນກວ່າ 90 ວັນ ສຳລັບເງິນຕົ້ນ, ເງິນລ່ວງໜ້າ, ດອກເບ້ຍ ຫຼື ເງິນລົງທຶນໃນຮຸ້ນກູ້ຂອງສາຂາ.

ສິນຊັບທາງການເງິນທີ່ກາຍເປັນການດ້ອຍຄ່າຂອງສິນເຊື່ອ ອາດຈະເກີດຈາກການກະທົບຂອງຫຼາຍເຫດການ ເຊິ່ງບໍ່ແມ່ນເຫດການທີ່ບໍ່ຕໍ່ເນື່ອງກັນພຽງຄັ້ງດຽວ, ສຳລັບຊັບສິນທາງການເງິນທີ່ມີບັນຫາດ້ານສິນເຊື່ອ ສາຂາຈະປະເມີນກະແສເງິນສົດໃນອານາຄົດ (ລວມເຖິງມູນຄ່າທີ່ຄາດວ່າຈະໄດ້ຮັບຄືນຂອງຫຼັກຊັບຄ້ຳປະກັນທີ່ໄດ້ຖືຄອງຢູ່) ໃນສະຖານະການທີ່ແຕກຕ່າງກັນເປັນລາຍບຸກຄົນ. ການຂາດທຶນທາງສິນເຊື່ອທີ່ຄາດວ່າຈະເກີດຂຶ້ນແມ່ນ ຄິດໄລ່ຈາກຜົນຕ່າງລະຫວ່າງການປະມານການມູນຄ່າປັດຈຸບັນຂອງກະແສເງິນສົດ ທີ່ຄິດລົດດ້ວຍອັດຕາດອກເບ້ຍທີ່ແທ້ຈິງເດີມ ກັບມູນຄ່າຕາມບັນຊີຂອງຊັບສິນ ຊຶ່ງການດັດແກ້ຈະເຫັນເຖິງ ກຳໄລ ຫຼື ຂາດທຶນ ໃນສ່ວນຂອງ ກຳໄລ ຫຼື ຂາດທຶນ ຈາກການຫັກເງິນແຮ.

*ພາຣາມິເຕີ້ ຂອງການຄິດໄລ່ ECL*

ຈາກຄວາມສ່ຽງທາງສິນເຊື່ອທີ່ເພີ່ມຂຶ້ນຢ່າງມີສາລະສຳຄັນ ແລະ ລວມເຖິງຊັບສິນທີ່ມີການດ້ອຍຄ່າທາງສິນເຊື່ອ, ສາຂາຈະຄິດໄລ່ເງິນແຮສຳລັບຊັບສິນທີ່ແຕກຕ່າງກັນກັບ ECL ຂອງ 12 ເດືອນ ຫຼື ຕະຫຼອດອາຍຸຂອງຊັບສິນນັ້ນ. ຕົວກຳນົດການທີ່ ສຳຄັນໃນການວັດແທກ ECL, ປະກອບມີຄວາມເປັນໄປໄດ້ຂອງຄ່າເລີ່ມຕົ້ນ (PD) ແລະ ຕົວຊັບເຊື່ອນຄວາມສ່ຽງດ້ານເງິນ ກູ້ທັງຫຼາຍ (EAD). ສາຂາໄດ້ພິຈາລະນາການວິເຄາະດ້ານປະລິມານຂອງສະຖິຕິໃນອາດີດ (ເຊັ່ນ: ການຈັດອັນດັບຂອງຄູ່ຄ້າ, ລັກສະນະການຄ້ຳປະກັນ ແລະ ປະເພດຂອງການຄ້ຳປະກັນ, ການຊຳລະຄືນ ແລະ ອື່ນໆ) ແລະ ຂໍ້ມູນລ່ວງໜ້າເພື່ອສ້າງຕົວແບບສຳລັບການຄາດຄະເນ PD, LGD ແລະ EAD.

*ຄຳນິຍາມທີ່ກ່ຽວຂ້ອງແມ່ນລະບຸໄວ້ດັ່ງຕໍ່ໄປນີ້:*

- PD ໝາຍເຖິງຄວາມເປັນໄປໄດ້ທີ່ລູກໜີ້ຈະບໍ່ສາມາດປະຕິບັດພັນທະຂອງການຊຳລະຄືນໃນໄລຍະ 12 ເດືອນຂ້າງໜ້າ ຫຼື ອາຍຸທີ່ຍັງເຫຼືອທັງໝົດ;
- LGD ໝາຍເຖິງຄວາມຄາດຫວັງຂອງສາຂາກ່ຽວກັບຂອບເຂດຂອງການສູນເສຍທີ່ເກີດຈາກການເປີດເຜີຍໃນຕອນຕົ້ນ. ອີງຕາມປະເພດຂອງຄູ່ຮ່ວມງານ, ບູລິມະສິດຂອງການໄດ້ຮັບຜົນປະໂຫຍດ ແລະ ປະເພດຂອງຫຼັກຊັບຄ້ຳ ປະກັນ, LGD ແຕກຕ່າງກັນ;
- EAD ແມ່ນຈຳນວນເງິນທີ່ສາຂາຄວນໄດ້ຮັບການຈ່າຍຄືນພາຍໃນ 12 ເດືອນຂ້າງໜ້າ ຫຼືຕະຫຼອດອາຍຸທີ່ຍັງເຫຼືອທັງໝົດ.

ຂໍ້ມູນການຄາດການລ່ວງໜ້າ

ການປະເມີນຄວາມສ່ຽງດ້ານສິນເຊື່ອທີ່ເພີ່ມຂຶ້ນຢ່າງເປັນສາລະສຳຄັນ ແລະ ການຄິດໄລ່ ECL ທີ່ກ່ຽວຂ້ອງກັບຂໍ້ມູນການຄາດການລ່ວງ ໜ້າ. ອີງຕາມການວິເຄາະຂໍ້ມູນໃນອາດີດ, ສາຂາໄດ້ກຳນົດຕົວຊີ້ວັດເສດຖະກິດມະຫາພາກທີ່ສຳຄັນທີ່ມີຜົນ ກະທົບຕໍ່ຄວາມສ່ຽງດ້ານສິນເຊື່ອແລະ ECL ຂອງປະເພດທຸລະກິດຕ່າງໆເຊັ່ນ: GDP, ການລົງທຶນໃນຊັບສິນຄົງທີ່, PPI, ດັດຊະນີລາຄາເຮືອນ, CPI.

ຜົນກະທົບຂອງຕົວຊີ້ວັດເສດຖະກິດເຫຼົ່ານີ້ຕໍ່ PD ແລະ LGD ແຕກຕ່າງກັນໄປຕາມປະເພດທຸລະກິດ. ສາຂາໄດ້ນຳໃຊ້ການ ຕັດສິນຂອງຜູ້ຊ່ຽວຊານໃນການວິເຄາະນີ້, ອີງຕາມຜົນຂອງການຕັດສິນຂອງຜູ້ຊ່ຽວຊານ, ສາຂາຄາດຄະເນຕົວຊີ້ວັດເສດຖະກິດເຫຼົ່ານີ້ເປັນປະຈຳໄຕມາດ ແລະ ກຳນົດຜົນກະທົບຂອງຕົວຊີ້ວັດເສດຖະກິດເຫຼົ່ານີ້ຕໍ່ PD ແລະ LGD ໂດຍການ ວິເຄາະການຖົດຖອຍ.

**2. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ** (ຕໍ່)

**2.7.** *ເງິນແຮຂອງກິດຈະກໍາສິນເຊື່ອ* (ຕໍ່)

ນອກເຫນືອຈາກສະຖານະການເສດຖະກິດພື້ນຖານ,ສາຂາດໍາເນີນການວິເຄາະສະຖິຕິດ້ວຍການຕັດສິນຂອງຜູ້ຊ່ຽວຊານ ເພື່ອກໍານົດສະຖານະການທີ່ເປັນໄປໄດ້ອື່ນໆ ແລະ ດ້ວຍການຊັ່ງຊາ. ສາຂາຄິດໄລ່ຄ່າ ECL ສະເລ່ຍທີ່ມີນໍ້າໜັກຂອງ 12 ເດືອນ (ຂັ້ນທີ 1) ຫຼືໄລຍະເວລາຊີວິດ (ຂັ້ນທີ 2 ແລະ ຂັ້ນທີ 3).

ສາຂາດໍາເນີນການວິເຄາະຄວາມອ່ອນໄຫວກ່ຽວກັບຕົວຊີ້ວັດເສດຖະກິດຕົ້ນຕໍ ທີ່ໃຊ້ໃນຂໍ້ມູນການຄາດການລ່ວງໜ້າ. ເມື່ອມູນຄ່າຄາດຄະເນຂອງຕົວຊີ້ວັດເສດຖະກິດຕົ້ນຕໍມີການປ່ຽນແປງ 10%, ຄວາມແຕກຕ່າງລະຫວ່າງສົມມຸດຕິຖານການ ຂາດທຶນທາງສິນເຊື່ອທີ່ຄາດວ່າຈະເກີດຂຶ້ນ ແລະ ການຄິດໄລ່ ການຂາດທຶນທາງສິນເຊື່ອທີ່ຄາດວ່າຈະເກີດຂຶ້ນຈະບໍ່ເກີນ 5%.

*ການຈັດກຸ່ມເຄື່ອງມືທາງການເງິນສໍາລັບຜົນການຂາດທຶນທີ່ວັດຕາມແບບສ່ວນລວມ*

ສໍາລັບການຫັກເງິນແຮການຂາດທຶນທາງສິນເຊື່ອທີ່ຄາດວ່າຈະເກີດຂຶ້ນ ແບບຈໍາລອງການລວບລວມ, ການຈັດກຸ່ມຂອງການ ເປີດເຜີຍແມ່ນປະຕິບັດບົນພື້ນຖານຂອງລັກສະນະຄວາມສ່ຽງຮ່ວມກັນ ເຊັ່ນວ່າການເປີດເຜີຍຄວາມສ່ຽງພາຍໃນກຸ່ມແມ່ນ ເປັນເອກະພາບ ໃນການປະຕິບັດການຈັດກຸ່ມນີ້ ຕ້ອງມີຂໍ້ມູນພຽງພໍສໍາລັບກຸ່ມ ເພື່ອໃຫ້ມີຄວາມໜ້າເຊື່ອຖືທາງສະຖິຕິ. ສາຂານໍາໃຊ້ການຈັດອັນດັບສິນເຊື່ອ ຕາມປະເພດຜະລິດຕະພັນ ແລະ ປະເພດລູກຄ້າ ແລະອື່ນໆ, ສໍາລັບການຈັດກຸ່ມເງິນກູ້ ສ່ວນບຸກຄົນ ແລະ ເງິນລ່ວງໜ້າ ເພື່ອຄິດໄລ່ການສູນເສຍທີ່ວັດແທກເປັນພື້ນຖານລວມ.

**2.8.** *ຫຼັກຊັບຖືໄວ້ຈົນຄົບກໍານົດ*

ຫຼັກຊັບການລົງທຶນທີ່ຖືໄວ້ຈົນຄົບກໍານົດ ແມ່ນຫຼັກຊັບທີ່ຄົງທີ່ ຫຼື ການຊໍາລະຄືນສາມາດກໍານົດໄດ້ ແລະ ມີມື້ຄົບກໍານົດທີ່ແນ່ນອນ ເຊິ່ງສາຂາມີຈຸດປະສົງ ຫຼື ສາມາດຖືໄວ້ຈົນຄົບກໍານົດເພື່ອຮັບດອກເບ້ຍ. ເມື່ອພາກສ່ວນໃຫຍ່ຂອງຫຼັກຊັບຖືກຂາຍກ່ອນວັນຄົບກໍານົດ, ຫຼັກຊັບເຫຼົ່ານີ້ຈະຖືກຈັດປະເພດຄືນໃໝ່ ເປັນຫຼັກຊັບເພື່ອການຄ້າ ຫຼື ຫຼັກຊັບທີ່ພ້ອມສໍາລັບການຂາຍ.

ຫຼັກຊັບຖືໄວ້ຈົນຄົບກໍານົດແມ່ນຖືກຮັບຮູ້ເລີ່ມຕົ້ນຈາກຕົ້ນທຶນ ແລະ ຈະຖືກນໍາສະເໜີຕາມຕົ້ນທຶນໃນໄລຍະຕໍ່ມາ. ຄ່າບໍລິການເພີ່ມເຕີມ ແລະ ສ່ວນຫຼຸດ ຈາກການຊື້ຫຼັກຊັບແມ່ນຈະຖືກຄິດໄລ່ໃນໃບລາຍງານຜົນການດໍາເນີນງານ ໂດຍການນໍາໃຊ້ວິທີການຄິດໄລ່ແບບເສັ້ນຊື່ຕະຫຼອດປີ ນັບຈາກວັນທີທີ່ໄດ້ຮັບມາຈົນເຖິງວັນຄົບກໍານົດ.

ຫຼັກຊັບຖືໄວ້ຈົນຄົບກໍານົດແມ່ນຈະຕ້ອງມີການທົບທວນສໍາລັບຂໍ້ບົກຜ່ອງເປັນແຕ່ລະໄລຍະ. ເງິນແຮສໍາລັບຫຼັກຊັບທີ່ມີຂໍ້ບົກຜ່ອງແມ່ນຈະຖືກສ້າງຂຶ້ນເມື່ອມີການຫຼຸດລົງຢ່າງມີໃນສໍາຄັນ ຫຼື ເປັນເວລາດົນຂອງມູນຄ່າຍຸດຕິທໍາທີ່ຕໍ່າກວ່າຕົ້ນທຶນ. ເຊິ່ງເງິນແຮດັ່ງກ່າວຈະຖືກຮັບຮູ້ໃນນາມຂອງ "ກໍາໄລ/(ຂາດທຶນ) ສຸດທິຈາກຫຼັກຊັບການລົງທຶນ" ໃນໃບລາຍງານຜົນການ ດໍາເນີນງານ.

**2.9.** *ຊັບສິນບັດຄົງທີ່*

ຊັບສິນບັດຄົງທີ່ມີຕົວຕົນລວມມີເຄື່ອງໃຊ້ຫ້ອງການ, ເຟີນິເຈີ ແລະ ເຄື່ອງຕິດຕັ້ງ, ການປັບປຸງອາຄານ ແລະ ອື່ນໆ.

ຊັບສິນບັດຄົງທີ່ໄດ້ຖືກລາຍງານຕາມຕົ້ນທຶນລົບໃຫ້ ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມສະສົມ, ຖ້າມີ.

ຕົ້ນທຶນຂອງຊັບສິນປະກອບດ້ວຍລາຄາຊື້ບວກກັບຄ່າໃຊ້ຈ່າຍທີ່ຕິດພັນໃນການເຮັດໃຫ້ຊັບສິນດັ່ງກ່າວສາມາດນໍາໃຊ້ໄດ້.

ບັນດາລາຍຈ່າຍສໍາລັບການຊື້ເພີ່ມ, ລາຍຈ່າຍການປັບປຸງ ແລະ ການຕໍ່ອາຍຸແມ່ນຈະຖືວ່າເປັນເປັນຕົ້ນທຶນ ແລະ ລາຍຈ່າຍສໍາລັບຄ່າບໍາລຸງຮັກສາ ແລະ ຄ່າສ້ອມແປງແມ່ນຈະບັນທຶກຢູ່ໃນໃບລາຍງານຜົນການດໍາເນີນງານ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.9. ຊັບສິນບັດຄົງທີ່* (ຕໍ່)

ເມື່ອຂາຍ ຫຼື ສະສາງຊັບສິນບັດ, ຕົ້ນທຶນ ແລະ ຄ່າຫຼູ້ຍຫ້ຽນສະສົມຈະຖືກສະສາງຈາກໃບລາຍງານຖານະທາງການເງິນ ແລະ ກຳໄລ ຫຼື ຂາດທຶນທີ່ມາຈາກການຂາຍອອກຈະຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

### *2.10. ຄ່າຫຼູ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ*

ຄ່າຫຼູ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າຂອງຊັບສິນບັດຄົງທີ່ແມ່ນ ຖືກຄິດໄລ່ຕາມວິທີຄິດໄລ່ແບບເສັ້ນຊື່ໃນອັດຕາທີ່ກຳນົດໃຊ້ຕໍ່ການຄາດຄະເນອາຍຸການນຳໃຊ້ຂອງຊັບສິນບັດເຫຼົ່ານັ້ນ ອີງຕາມກົດໝາຍ ສ່ວຍສາອາກອນຂອງ ສປປ ລາວ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ໃນວັນທີ ຫຼື ຫຼັງຈາກ ວັນທີ 1 ມັງກອນ 2020 ອອກໂດຍປະທານສະພາແຫ່ງຊາດ, ອັດຕາການຄິດໄລ່ຄ່າຫຼູ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າປະຈຳປີມີດັ່ງຕໍ່ໄປນີ້:

| | |
|---|---|
| ສິດນຳໃຊ້ທີ່ດິນບໍ່ມີກຳນົດອາຍຸ | ບໍ່ມີຄ່າເສື່ອມມູນຄ່າ |
| ເຄື່ອງໃຊ້ຫ້ອງການ | 20% |
| ອາຄານ ແລະ ການປັບປຸງອາຄານ | 20% |
| ເຟີນີເຈີ ແລະ ເຄື່ອງຕິດຕັ້ງ | 20% |
| ອຸປະກອນຄອມພິວເຕີ | 20% |
| ພາຫະນະ | 20% |

### *2.11. ຄັງສະສົມຕາມລະບຽບການ*

ພາຍໃຕ້ຂໍ້ກຳນົດຂອງກົດໝາຍວ່າດ້ວຍ ທະນາຄານທຸລະກິດ ລົງວັນທີ 7 ກໍລະກົດ 2023, ບັນດາທະນາຄານທຸລະກິດຕ້ອງໄດ້ແບ່ງຜົນກຳໄລສຸດທິເພື່ອນຳໄປສ້າງຄັງສຳຮອງຕາມລະບຽບການ ດັ່ງລຸ່ມນີ້:

- ຄັງສະສົມຕາມລະບຽບການ
- ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ

ອີງຕາມມາດຕາທີ 154 ໃນກົດໝາຍວິສາຫະກິດ ລົງວັນທີ 29 ທັນວາ 2022, ທະນາຄານແມ່ນຕ້ອງໄດ້ຈັດສັນ 10% ຂອງກຳໄລຫຼັງອາກອນຂອງແຕ່ລະປີເຂົ້າຄັງສຳຮອງຕາມກົດໝາຍ. ເມື່ອຄັງດັ່ງກ່າວມີມູນຄ່າເຖິງ 50% ຂອງທຶນຈົດທະບຽນ, ທະນາຄານອາດຢຸດການສຳຮອງເງິນແຮດັ່ງກ່າວ, ເວັ້ນເສຍແຕ່ກົດໝາຍຈະກຳນົດໄວ້ເປັນຢ່າງອື່ນ.

ກອງທຶນເພື່ອຂະຫຍາຍທຸລະກິດ ແລະ ກອງທຶນອື່ນໆຕ້ອງໄດ້ຮັບການສ້າງຂຶ້ນຕາມການພິຈາລະນາຂອງຄະນະຜູ້ບໍລິຫານ.

### *2.12. ການເຊົ່າ*

#### *2.12.1. ສິດໃນການນຳໃຊ້ຊັບສິນ*

ໃນມື້ເລີ່ມຕົ້ນຂອງສັນຍາ, ສາຂາຈະປະເມີນວ່າສັນຍາ, ຫຼື ປະກອບດ້ວຍອົງປະກອບຂອງການເຊົ່າບໍ່ນັ້ນ ແມ່ນອີງຕາມການພິຈາລະນາສັນຍາທີ່ບົ່ງບອກເຖິງການເປັນຜູ້ນຳໃຊ້ (ຜູ້ເຊົ່າ) ສິດໃນການຄວບຄຸມການນຳໃຊ້ຊັບສິນ ທີ່ລະບຸໃນຊ່ວງໄລຍະເວລາໃດໜຶ່ງໃນການແລກປ່ຽນ. ຫາກສັນຍາມີອົງປະກອບການເຊົ່າຫຼາຍກວ່າໜຶ່ງອົງປະກອບ ຫຼື ປະສົມປະສານທຸລະກຳການເຊົ່າ ແລະ ການບໍລິການ ຈະຖືກພິຈາລະນາໃຫ້ແບ່ງອອກເປັນສ່ວນຕາມແຕ່ລະອົງປະກອບຂອງສັນຍາເຊົ່າ ແລະ ທີ່ບໍ່ແມ່ນອົງປະກອບຂອງສັນຍາເຊົ່າໂດຍສະຫຼຸບ ແລະ ຕີລາຄາຂອງສັນຍາຄືນໃໝ່ທຸກຄັ້ງຕາມພື້ນຖານລາຄາຊື້ຂາຍສິນຄ້າລາຍການດຽວ. ສາຂາປະສົມປະສານສ່ວນປະກອບຂອງສັນຍາເຊົ່າ ແລະ ອົງປະກອບທີ່ບໍ່ແມ່ນສັນຍາເຊົ່າໃນກໍລະນີທີ່ບໍ່ສາມາດແຍກສ່ວນປະກອບທີ່ບໍ່ແມ່ນສັນຍາຄ່າເຊົ່າໄດ້.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.12. ການເຊົ່າ (ຕໍ່)*

ສາຂາຮັບຮູ້ສິດນຳໃຊ້ຊັບສິນໃນວັນທີເລີ່ມຕົ້ນຂອງການເຊົ່າ (ຕົວຢ່າງ, ວັນທີທີ່ຊັບສິນທີ່ຕິດພັນສາມາດນຳໃຊ້ໄດ້). ສິດນຳໃຊ້ຊັບສິນແມ່ນຖືກວັດແທກຕາມຕົ້ນທຶນ, ລົບໃຫ້ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມສະສົມ, ແລະ ດັດປັບການວັດແທກຄືນໜີ້ສິນຕາມສັນຍາເຊົ່າ. ຕົ້ນທຶນຂອງສິດນຳໃຊ້ຊັບສິນລວມມີ ມູນຄ່າໜີ້ຕ້ອງສົ່ງສັນຍາເຊົ່າດັດແກ້ສຳລັບ ການຊຳລະສະສາງທີ່ເກີດຂຶ້ນນະມື້ ຫຼື ກ່ອນວັນທີເລີ່ມຕົ້ນຂອງການເຊົ່າ, ບວກບັນດາລາຍຈ່າຍຕົ້ນທຶນທາງກົງທີ່ເກີດຂຶ້ນ ແລະ ລາຍຈ່າຍຄາດຄະເນທີ່ຈະຮື້ຖອນ ແລະ ເຄື່ອນຍ້າຍຊັບສິນອື່ນໆພາຍໃຕ້ສັນຍາເຊົ່າ ຫຼື ການຕິດຕັ້ງຄືນບັນດາຊັບສິນ ຫຼື ສະຖານທີ່ທີ່ຕັ້ງຢູ່ນັ້ນ, ລົບສິ່ງຈູງໃຈການເຊົ່າທີ່ໄດ້ຮັບ. ໄລຍະເວລາການເຊົ່າ ລວມເຖິງທາງເລືອກຂອງໄລຍະການຕໍ່ສັນຍາຖ້າມີຄວາມແນ່ນອນທີ່ສົມເຫດສົມຜົນໃນການທີ່ຈະປະຕິບັດທາງເລືອກນັ້ນ. ນອກຈາກວ່າ ສາຂາລວບລວມສິດຄວາມເປັນເຈົ້າຂອງທີ່ແນ່ນອນຂອງຊັບສິນຈາກສັນຍາເຊົ່າໄດ້ຢ່າງສົມເຫດສົມຜົນໃນມື້ສິ້ນສຸດໄລຍະເວລາເຊົ່າ, ການຮັບຮູ້ສິດນຳໃຊ້ຊັບສິນ ແມ່ນຈະຫັກຄ່າຫຼຸ້ຍຫ້ຽນແບບເສັ້ນຊື່ຕາມອາຍຸການໃຊ້ງານ ແລະ ອາຍຸສັນຍາຄ່າເຊົ່າ. ສິດນຳໃຊ້ຊັບສິນແມ່ນຈະຕ້ອງໄດ້ຮັບການປະເມີນຄ່າເສື່ອມມູນຄ່າ.

### *2.12.2. ໜີ້ສິນຕາມສັນຍາເຊົ່າ*

ໃນວັນທີເລີ່ມຕົ້ນຂອງການເຊົ່າ, ສາຂາໄດ້ຮັບຮູ້ໜີ້ສິນຕາມສັນຍາເຊົ່າທີ່ຖືກວັດແທກໃນມູນຄ່າປັດຈຸບັນຂອງການຈ່າຍຄ່າເຊົ່າທີ່ຕ້ອງຈ່າຍຕະຫຼອດໄລຍະສັນຍາເຊົ່າ. ການຈ່າຍຄ່າເຊົ່າລວມມີການຈ່າຍແບບຄົງທີ່ (ລວມທັງການຈ່າຍເປັນກຳມະສິດ), ການຈ່າຍຄ່າເຊົ່າທີ່ປ່ຽນແປງອີງຕາມດັດສະນີ ຫຼື ອັດຕາ, ແລະ ຈຳນວນທີ່ຄາດວ່າຈະຈ່າຍພາຍໃຕ້ການຄ້ຳປະກັນມູນຄ່າທີ່ເຫຼືອ. ການຈ່າຍຄ່າເຊົ່າ ຍັງລວມມີລາຄາທີ່ໃຊ້ໃນທາງເລືອກໃນການຊື້ທີ່ແນ່ນອນຢ່າງສົມເຫດສົມຜົນວ່າ ຈະປະຕິບັດໂດຍສາຂາ ແລະ ການຈ່າຍຄ່າປັບໄໝສຳລັບການຍຸດຕິການເຊົ່າ, ຖ້າວ່າສັນຍາເຊົ່າສະທ້ອນໃຫ້ເຫັນການໃຊ້ທາງເລືອກໃນການຍຸດຕິ. ການຈ່າຍຄ່າເຊົ່າທີ່ປ່ຽນແປງໂດຍບໍ່ຂຶ້ນກັບດັດສະນີ ຫຼື ອັດຕາຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນກໍລະນີທີ່ເຫດການ ຫຼື ສະພາບການທີ່ກໍ່ໃຫ້ເກີດການຈ່າຍເງິນເກີດຂຶ້ນ.

ໃນການຄິດໄລ່ມູນຄ່າປັດຈຸບັນຂອງການຊຳລະຄ່າເຊົ່າ, ສາຂານຳໃຊ້ອັດຕາສ່ວນເພີ່ມຂອງການກູ້ຢືມນະມື້ເລີ່ມຕົ້ນຂອງສັນຍາເຊົ່າ ຖ້າອັດຕາດອກເບ້ຍສ່ວນຫຼຸດສັນຍາເຊົ່າບໍ່ສາມາດກຳນົດໄດ້. ຫຼັງຈາກມື້ເລີ່ມຕົ້ນຂອງສັນຍາເຊົ່າ, ມູນຄ່າໜີ້ສິນຕາມສັນຍາເຊົ່າ ແມ່ນເພີ່ມຂຶ້ນເພື່ອສະທ້ອນເຖິງດອກເບ້ຍ ແລະ ສ່ວນລົດລົງຈາກໄດ້ຮັບການຊຳລະສັນຍາເຊົ່າ. ນອກຈາກນີ້, ມູນຄ່າຕາມບັນຊີ ຂອງໜີ້ສິນຕາມສັນຍາເຊົ່າ ແມ່ນໄດ້ຮັບການວັດແທກຄືນໃໝ່ຖ້າມີການປ່ຽນແປງໃດໜຶ່ງ ເຊັ່ນການປ່ຽນແປງຂອງໄລຍະເວລາການເຊົ່າ, ການປ່ຽນແປງໃນເນື້ອໃນເງື່ອນໄຂການຊຳລະ ຫຼື ປ່ຽນແປງໃນການປະເມີນເພື່ອຊື້ບັນດາຊັບສິນດັ່ງກ່າວ.

### *2.12.3. ການເຊົ່າໄລຍະສັ້ນ ແລະ ການເຊົ່າຊັບສິນມູນຄ່າຕ່ຳ*

ສາຂານຳໃຊ້ການຍົກເວັ້ນການຮັບຮູ້ສັນຍາເຊົ່າໄລຍະສັ້ນທີ່ມີໄລຍະເວລາ 12 ເດືອນ ຫຼື ໜ້ອຍກວ່າຈາກວັນທີເລີ່ມຕົ້ນຂອງການເຊົ່າ ແລະ ບໍ່ລະບຸທາງເລືອກໃນການຊື້. ພ້ອມທັງນຳໃຊ້ການຍົກເວັ້ນການຮັບຮູ້ສັນຍາເຊົ່າຊັບສິນມູນຄ່າຕ່ຳຂອງຊັບສິນທີ່ພິຈາລະນາວ່າມີມູນຄ່າຕ່ຳ. ການຊຳລະຄ່າເຊົ່າຂອງສັນຍາເຊົ່າໄລຍະສັ້ນ ແລະ ຊັບສິນທີ່ມີມູນຄ່າຕ່ຳ ແມ່ນຮັບຮູ້ເປັນລາຍຈ່າຍແບບເສັ້ນຊື່ຕະຫຼອດໄລຍະສັນຍາເຊົ່າ.

### *2.12.4. ການດັດແກ້ທີ່ສຳຄັນໃນການກຳນົດໄລຍະສັນຍາການເຊົ່າຂອງທາງເລືອກການຕໍ່ສັນຍາຄືນໃໝ່*

ສາຂາກຳນົດໄລຍະເວລາການເຊົ່າລະບຸໄລຍະເວລາທີ່ບໍ່ສາມາດຍົກເລີກຂອງການເຊົ່າ, ລວມທັງໄລຍະເວລາຂອງທາງເລືອກໃນການຕໍ່ສັນຍາເຊົ່າ ຖ້າມີຄວາມໝັ້ນໃຈວ່າຈະເລືອກທາງນີ້ ຫຼື ໄລຍະເວລາຂອງທາງເລືອກໃນການຍຸດຕິສັນຍາເຊົ່າ ຖ້າມີຄວາມໝັ້ນໃຈວ່າຈະບໍ່ເລືອກທາງດັ່ງກ່າວ.

**2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*2.12.4. ການຕັດແກ້ທີ່ສຳຄັນໃນການກຳນົດໄລຍະສັນຍາການເຊົ່າຂອງທາງເລືອກການຕໍ່ສັນຍາຄືນໃໝ່ (ຕໍ່)*

ສາຂານຳໃຊ້ການຕັດສິນໃຈໃນການປະເມີນວ່າຈະດຳເນີນການຕໍ່ສັນຍາຄືນໃໝ່ທີ່ແນ່ນອນ. ການຕັດສິນໃຈແມ່ນພິຈາລະນາປັດໄຈທີ່ກ່ຽວຂ້ອງທັງໝົດທີ່ກໍ່ໃຫ້ເກີດການຈູງໃຈທາງເສດຖະກິດສຳລັບການດຳເນີນການຕໍ່ສັນຍາຄືນໃໝ່. ຫຼັງຈາກວັນທີເລີ່ມຕົ້ນ ສາຂາປະເມີນຄືນໃໝ່໌ໜີ້ສິນຕາມສັນຍາເຊົ່າ ຖ້າມີເຫດການທີ່ສຳຄັນພາຍໃນການຄວບຄຸມ ແລະ ກະທົບຕໍ່ຄວາມສາມາດທີ່ຈະດຳເນີນ (ຫຼື ບໍ່ດຳເນີນ) ການຕໍ່ສັນຍາຄືນໃໝ່ (ຕົວຢ່າງ ການປ່ຽນແປງທາງຍຸດທະສາດຂອງທຸລະກິດ). ສາຂາລວມມີໄລຍະເວລາການຕໍ່ສັນຍາຄືນໃໝ່ ເປັນສ່ວນໜຶ່ງຂອງໄລຍະເວລາການເຊົ່າທີ່ສຳຄັນຂອງຊັບສິນເຫຼົ່ານີ້ໃນການດຳເນີນງານ.

ການກຳນົດວ່າອຸປະກອນແມ່ນການເຊົ່າ ຫຼື ບໍ່, ຫຼື ປະກອບມີການເຊົ່າ ແມ່ນອີງຕາມເນື້ອໃນຂອງອຸປະກອນ ແລະ ຈຳຕ້ອງມີການປະເມີນວ່າມີອຸປະກອນຄືບຖ້ວນ ຫຼື ບໍ່ນັ້ນ ແມ່ນອີງຕາມການນຳໃຊ້ສະເພາະຂອງຊັບສິນ ຫຼື ຊັບສິນ ແລະ ອຸປະກອນທີ່ເປັນສິດນຳໃຊ້ຊັບສິນ.

*ສາຂາໃນຖານະຜູ້ເຊົ່າ*

ການເຊົ່າ, ທີ່ທຸກຄວາມສ່ຽງ ແລະ ຜົນປະໂຫຍດຂອງຄວາມເປັນເຈົ້າຂອງລາຍການການເຊົ່າ ບໍ່ຖືກໂອນໄປຍັງສາຂາແມ່ນການເຊົ່າໃນການດຳເນີນງານ. ການຊຳລະການເຊົ່າໃນການດຳເນີນງານ ແມ່ນຮັບຮູ້ເປັນລາຍຈ່າຍໃນ ກຳໄລ ຫຼື ຂາດທຶນ ຕາມແບບເສັ້ນຊື່ຕະຫຼອດອາຍຸຂອງສັນຍາເຊົ່າ. ໜີ້ສິນຕາມສັນຍາເຊົ່າແມ່ນຮັບຮູ້ເປັນລາຍຈ່າຍໃນຊ່ວງໄລຍະທີ່ລາຍການເກີດຂຶ້ນ.

***2.13. ລາຍການເຄື່ອນໄຫວທີ່ເປັນສະກຸນເງິນຕາຕ່າງປະເທດ***

ສາຂາໄດ້ປະຕິບັດລະບົບການບັນຊີ ແລະ ບັນທຶກທຸກການເຄື່ອນໄຫວຕາມສະກຸນເງິນເດີມ, ລາຍຈ່າຍ ແລະ ລາຍຮັບທີ່ເກີດຂຶ້ນເປັນສະກຸນເງິນຕາຕ່າງປະເທດໃນປີຈະຖືກຕີມູນຄ່າເປັນເງິນກີບໂດຍທຽບໃສ່ອັດຕາແລກປ່ຽນໃນມື້ທີ່ທຸລະກຳເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນເງິນຕາຕ່າງປະເທດໃນທ້າຍປີຈະຖືກຕີມູນຄ່າເປັນເງິນກີບຕາມອັດຕາແລກປ່ຽນໃນມື້ສ້າງໃບລາຍງານຖານະທາງການເງິນ (ລາຍລະອຽດອັດຕາແລກປ່ຽນເງິນຕາຕ່າງປະເທດທຽບໃສ່ເງິນກີບໃນ ວັນທີ 31 ທັນວາ 2025 ໄດ້ສະແດງຢູ່ຂ້າງລຸ່ມນີ້). ສ່ວນຜິດດ່ຽງທີ່ເກີດຂຶ້ນຈາກການຕີມູນຄ່າຊັບສິນ ແລະ ໜີ້ສິນ ນະມື້ໃບລາຍງານຖານະການເງິນແມ່ນຖືກບັນທຶກເຂົ້າໃນ *"ກຳໄລຈາກການຊື້ຂາຍເງິນຕາຕ່າງປະເທດສຸດທິ"* ໃນໃບລາຍງານຜົນການດຳເນີນງານ.

| | *31/12/2025*<br>*ກີບ* | *31/12/2024*<br>*ກີບ* |
|---|---:|---:|
| ໂດລາ ສະຫະລັດ ("USD") | 20,390.00 | 20,552.00 |
| ບາດ ໄທ ("THB") | 648.12 | 602.17 |
| ຢວນ ("CNY") | 2,917.00 | 2,812.00 |

**2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

***2.14. ອາກອນ***

*ອາກອນພາຍໃນປີ*

ການຄິດໄລ່ເງິນແຮສຳລັບອາກອນກຳໄລແມ່ນອີງຕາມກຳໄລພາຍໃນໄລຍະປັດຈຸບັນ ເຊິ່ງອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ. ສາຂາມີພັນທະຈ່າຍອາກອນໃນອັດຕາ 20% ຂອງກຳໄລທັງໝົດກ່ອນຫັກອາກອນ ໂດຍອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນໃໝ່ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ຫຼັງຈາກວັນທີ 1 ມັງກອນ 2020. ຈາກທີ່ໄດ້ກ່າວມານັ້ນ, ສາຂານອນໃນອັດຕາອາກອນຂອງ 20% ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025 (2024:20%). ການແຈ້ງອາກອນຂອງສາຂາຕ້ອງໄດ້ຮັບການກວດກາໂດຍ ກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງກົມສ່ວຍສາອາກອນ.

*ອາກອນລໍຖ້າສະສາງ*

ອາກອນລໍຖ້າສະສາງແມ່ນຖືກຄິດໄລ່ຈາກສ່ວນຕ່າງຊົ່ວຄາວ ຕາມມື້ທີ່ອອກໃບລາຍງານຖານະການເງິນ ລະຫວ່າງຊັບສິນ ແລະ ໜີ້ສິນທາງອາກອນ ແລະ ມູນຄ່າຕາມບັນຊີເພື່ອຈຸດປະສົງໃນການລາຍງານທາງການເງິນ. ໜີ້ສິນອາກອນລໍຖ້າສະສາງແມ່ນຖືກຮັບຮູ້ເປັນສ່ວນຜິດດ່ຽງຊົ່ວຄາວດ້ານອາກອນ, ຍົກເວັ້ນເມື່ອໜີ້ສິນອາກອນລໍຖ້າສະສາງລະເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນ ໃນເວລານັ້ນການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງດ້ານບັນຊີ ຫຼື ກຳໄລຖືກເສຍອາກອນ ແລະ ຂາດທຶນທາງອາກອນ.

ມູນຄ່າຕາມບັນຊີຂອງຊັບສິນອາກອນລໍຖ້າສະສາງ ແມ່ນຖືກກວດກາຄືນໃນມື້ສ້າງບົດລາຍງານ ແລະ ຫຼຸດລົງ ຖ້າມີຄວາມເປັນໄປໄດ້ວ່າຈະບໍ່ມີກຳໄລທີ່ຖືກເສຍອາກອນທີ່ອະນຸຍາດໃຫ້ທັງໝົດ ຫຼື ພາກສ່ວນໜຶ່ງຂອງຊັບສິນອາກອນລໍຖ້າສະສາງຈະຖືກອະນຸຍາດໃຫ້ຫັກ. ຊັບສິນອາກອນລໍຖ້າສະສາງທີ່ບໍ່ຖືກຮັບຮູ້ ແມ່ນຖືກປະເມີນຄືນໃນມື້ສ້າງບົດລາຍງານ ແລະ ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າກຳໄລທີ່ຖືກເສຍອາກອນໃນອະນາຄົດ ຈະອະນຸຍາດໃຫ້ຊັບສິນອາກອນລໍຖ້າສະສາງ ສາມາດຫັກອອກໄດ້.

ຊັບສິນອາກອນລໍຖ້າສະສາງ ແລະ ໜີ້ສິນອາກອນລໍຖ້າສະສາງແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນຳໄປໃຊ້ພາຍໃນປີ ເມື່ອຊັບສິນຖືກຮັບຮູ້ມູນຄ່າຕົວຈິງ ຫຼື ໜີ້ສິນຖືກສະສາງ ອີງຕາມອັດຕາອາກອນ (ແລະ ກົດໝາຍສ່ວຍສາອາກອນ) ທີ່ໄດ້ປະກາດໃຊ້ນະມື້ກະກຽມໃບລາຍງານຖານະການເງິນ.

ອາກອນໃນປີ ແລະ ອາກອນເບື້ອນຊຳລະຈະຖືກຮັບຮູ້ເປັນລາຍຮັບຜົນປະໂຫຍດທາງອາກອນ ຫຼື ລາຍຈ່າຍໃນໃບລາຍງານຜົນການດຳເນີນງານ.

ສາຂາໄດ້ຫັກລ້າງຊັບສິນອາກອນລໍຖ້າສະສາງ ແລະ ໜີ້ສິນອາກອນລໍຖ້າສະສາງຖ້າຫາກມີສິດບັງຄັບໃຊ້ທາງກົດໝາຍ ແລະ ສາຂາມີຄວາມຕັ້ງໃຈທີ່ຈະລາຍງານເປັນມູນຄ່າສຸດທິ.

**2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

***2.15. ຜົນປະໂຫຍດຂອງພະນັກງານ***

*ຜົນປະໂຫຍດຂອງພະນັກງານ*

ຜົນປະໂຫຍດຂອງພະນັກງານຫຼັງອອກການຈະຖືກຈ່າຍໃຫ້ພະນັກງານຂອງສາຂາຜູ້ທີ່ກິນເບ້ຍບຳນານໂດຍພະແນກກອງທຶນສະຫວັດດີການສັງຄົມເຊິ່ງຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສາຂາໄດ້ຖືກກຳນົດໃຫ້ປະກອບສ່ວນເຂົ້າໃນຜົນປະໂຫຍດຫຼັງອອກການຂອງພະນັກງານ ໂດຍການຈ່າຍເງິນຄ່າປະກັນສັງຄົມໃຫ້ກັບຕົວແທນປະກັນສັງຄົມໃນຈຳນວນທຽບເທົ່າ 6.00% ຂອງເງິນເດືອນພື້ນຖານຂອງພະນັກງານ ທຸກໆເດືອນ ແຕ່ບໍ່ເກີນ 270,000 ກີບຕໍ່ພະນັກງານໜຶ່ງຄົນຕໍ່ເດືອນ. ສາຂາບໍ່ມີພັນທະອື່ນອີກນອກຈາກຜົນປະໂຫຍດຂອງພະນັກງານນອກເໜືອຈາກນີ້.

*ຜົນປະໂຫຍດຈາກການເລີກຈ້າງ*

ອີງຕາມມາດຕາ 82 ຂອງກົດໝາຍວ່າດ້ວຍແຮງງານສະບັບປັບປຸງເລກທີ 43/ສພຊ ອະນຸມັດໂດຍປະທານປະເທດຂອງ ສປປ ລາວ ໃນວັນທີ 28 ມັງກອນ 2014, ສາຂາມີພັນທະຈ່າຍເງິນຊົດເຊີຍໃຫ້ພະນັກງານຜູ້ທີ່ຖືກເລີກຈ້າງຕາມເງື່ອນໄຂດັ່ງລຸ່ມນີ້:

- ໃນກໍລະນີເມື່ອພະນັກງານຂາດທັກສະຄວາມຊຳນານ ຫຼື ບໍ່ມີສຸຂະພາບແຂງແຮງ ດັ່ງນັ້ນ, ຈຶ່ງບໍ່ສາມາດເຮັດວຽກຕໍ່ໄດ້.;
- ເມື່ອນາຍຈ້າງຫາກໄດ້ພິຈາລະນາວ່າມີຄວາມຈຳເປັນຈະຕ້ອງໄດ້ຫຼຸດຈຳນວນພະນັກງານລົງເພື່ອປັບປຸງໂຄງສ້າງວຽກງານພາຍໃນໜ່ວຍງານ.

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນອຸດໜູນເລີກຈ້າງເທື່ອດຽວໃຫ້ພະນັກງານ ເຊິ່ງການຄິດໄລ່ແມ່ນ 10% ຂອງເງິນເດືອນສຸດທ້າຍຄູນໂດຍຈຳນວນເດືອນທີ່ໄດ້ເຮັດວຽກ. ນະວັນທີ 31 ທັນວາ 2025, ສາຂາບໍ່ມີພະນັກງານທີ່ຕົກຢູ່ພາຍໃຕ້ກໍລະນີທີ່ໄດ້ກ່າວມາຂ້າງເທິງ. ດັ່ງນັ້ນ, ສາຂາຈຶ່ງບໍ່ໄດ້ສ້າງຄັງແຮສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນ.

**3. ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ**

| | *2025*<br>*ລ້ານກີບ* | *2024*<br>*ລ້ານກີບ* |
|---|---|---|
| **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນຈາກ:** | | |
| ທຸລະກຳລະຫວ່າງທະນາຄານ | 481,471 | 507,770 |
| ເງິນກູ້ໃຫ້ລູກຄ້າ | 225,646 | 177,474 |
| ຫຼັກຊັບຖືໄວ້ຈົນຄົບກຳນົດ | 32,982 | 2,151 |
| | **740,099** | **687,395** |
| **ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນສຳລັບ:** | | |
| ທຸລະກຳລະຫວ່າງທະນາຄານ | (4,943) | (41,097) |
| ເງິນຝາກຂອງລູກຄ້າ | (244,515) | (229,222) |
| | **(249,458)** | **(270,319)** |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | **490,641** | **417,076** |

## 4. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ

| | 2025<br>*ລ້ານກີບ* | 2024<br>*ລ້ານກີບ* |
|---|---|---|
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:** | | |
| ຄ່າບໍລິການສຳລະສະສາງ | 14,981 | 11,135 |
| ຄ່າບໍລິການທາງການເງິນ | 7,764 | 3,010 |
| ຄ່າບໍລິການອື່ນໆ | 13,370 | 13,042 |
| | **36,115** | **27,187** |
| **ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ** | | |
| ຄ່າທຳນຽມທາງການເງິນ | (4,514) | (3,388) |
| ຄ່າທຳນຽມຊຳລະສະສາງໃຫ້ທະນາຄານກາງ | (120) | (103) |
| ຄ່າສະມາຊິກ | (62) | (1,010) |
| | **(4,696)** | **(4,501)** |
| **ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ** | **31,419** | **22,686** |

## 5. ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ

| | 2025<br>*ລ້ານກີບ* | 2024<br>*ລ້ານກີບ* |
|---|---|---|
| ກຳໄລສຸດທິຈາກການຊື້ - ຂາຍເງິນຕາຕ່າງປະເທດ | 120,756 | 50,012 |
| ກຳໄລ/(ຂາດທຶນ)ສຸດທິຈາກຈາກການຕີມູນຄ່າລາຍການທີ່ເປັນເງິນຕາຕ່າງປະເທດ | (14,034) | 125,467 |
| | **106,722** | **175,479** |

## 6. ລາຍຈ່າຍເງິນເດືອນ ແລະ ລາຍຈ່າຍອື່ນໆຂອງພະນັກງານ

| | 2025<br>*ລ້ານກີບ* | 2024<br>*ລ້ານກີບ* |
|---|---|---|
| ຄ່າແຮງງານ ແລະ ເງິນເດືອນ | 81,748 | 66,536 |
| ລາຍຈ່າຍອື່ນໆກ່ຽວກັບພະນັກງານ | 5,445 | 3,762 |
| | **87,193** | **70,298** |

## 7. ລາຍຈ່າຍບໍລິຫານອື່ນໆ

| | *2025*<br>*ລ້ານກີບ* | *2024*<br>*ລ້ານກີບ* |
|---|---:|---:|
| ຄ່າເຊົ່າຫ້ອງການ | 131 | 571 |
| ຄ່າບໍລິການພາຍນອກ | 2,020 | 1,224 |
| ຄ່າສ້ອມແປງ ແລະ ບໍາລຸງຮັກສາ | 1,362 | 1,451 |
| ຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 5,438 | 3,606 |
| ຄ່າໂທລະຄົມມະນາຄົມ | 3,220 | 3,020 |
| ຄ່າຝຶກອົບຮົມ, ປະຊຸມ ແລະ ສໍາມະນາ | 5,738 | 5,891 |
| ຄ່ານໍ້າ ແລະ ຄ່າໄຟຟ້າ | 2,406 | 2,405 |
| ຄ່າກວດສອບ | 361 | 330 |
| ອື່ນໆ | 4,049 | 5,442 |
| | **24,725** | **23,940** |

## 8. ລາຍຈ່າຍອື່ນໆການດໍາເນີນງານ

| | *2025*<br>*ລ້ານກີບ* | *2024*<br>*ລ້ານກີບ* |
|---|---:|---:|
| ຄ່າໃຊ້ຈ່າຍໃຫ້ກອງທຶນປົກປ້ອງຜູ້ຝາກເງິນ | 12,328 | 641 |
| ລາຍຈ່າຍອື່ນໆ | 568 | 2,466 |
| | **12,896** | **3,107** |

## 9. ເງິນສົດໃນຄັງ

| | *31/12/2025*<br>*ລ້ານກີບ* | *31/12/2024*<br>*ລ້ານກີບ* |
|---|---:|---:|
| ເງິນສົດໃນຄັງເປັນເງິນກີບ | 2,329 | 5,512 |
| ເງິນສົດໃນຄັງເປັນເງິນຕາຕ່າງປະເທດ | 31,348 | 47,375 |
| | **33,677** | **52,887** |

## 10. ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ (“ທຫລ”)

| | *31/12/2025*<br>*ລ້ານກີບ* | *31/12/2024*<br>*ລ້ານກີບ* |
|---|---:|---:|
| ເງິນຝາກກະແສລາຍວັນ | 1,256,293 | 1,755,823 |
| ເງິນຝາກມີກໍານົດ (i) | 7,197,740 | 5,338,000 |
| ເງິນຝາກແຮບັງຄັບ (ii) | 1,314,244 | 20,108 |
| ເງິນຝາກຄໍ້າປະກັນທຶນ ຈົດທະບຽນ (III) | 5 | 5 |
| | **9,768,282** | **7,113,936** |

## 10. ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ (“ທຫລ”) (ຕໍ່)

(*) ເງິນຝາກຢູ່ ທຫລ ແມ່ນມີໄລຍະ 1 ປີ ຫາ 5 ປີ ແລະ ມີດອກເບ້ຍໃນອັດຕາຄົງທີ່ຈາກ 5.70% ຫາ 7.00% ຕໍ່ປີ.

(*) ອີງຕາມຂໍ້ກຳນົດຂອງ ທຫລ, ສາຂາໄດ້ຖືກຮຽກຮ້ອງໃຫ້ຮັກສາຄັງແຮເງິນສົດໄວ້ກັບ ທຫລ ໃນຮູບແບບເງິນຝາກແຮບັງຄັບ, ເຊິ່ງຖືກຄິດໄລ່ໃນອັດຕາ 8.00% ສຳລັບສະກຸນເງິນກີບ ແລະ 11% ສຳລັບສະກຸນເງິນຕາຕ່າງປະເທດ (2024: 8.00% ແລະ 11.00% ຕາມລຳດັບ), 2 ເດືອນຕໍ່ຄັ້ງ ຂອງຍອດເງິນຝາກລູກຄ້າທີ່ມີກຳນົດຕໍ່າກວ່າ 12 ເດືອນ. ພາຍໃນປີ ສາຂາຮັກສາເງິນຝາກແຮບັງຄັບສອດຄ່ອງກັບຂໍ້ກຳນົດຂອງ ທຫລ.

(**) ອີງຕາມການຕັດສິນໃຈເລກທີ 721/BOL ທີ່ອອກໂດຍ BOL ລົງວັນທີ 22 ກັນຍາ 2022, ເຊິ່ງມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 22 ກັນຍາ 2022, ທະນາຄານການຄ້າຕ້ອງຮັກສາຍອດເງິນທີ່ເປັນບວກຢູ່ທີ່ BOL ໃນຮູບແບບເງິນຝາກພິເສດ. ຫຼັງຈາກນັ້ນ, ສາຂາໄດ້ຮັບການອະນຸມັດຈາກ BOL ໃນຈົດໝາຍທາງການເລກທີ 38/BSD ລົງວັນທີ 18 ມັງກອນ 2024 ໃຫ້ຖອນເງິນຈາກບັນຊີເງິນຝາກນີ້ເພື່ອເສີມທຶນຫມູນວຽນຂອງຕົນ.

## 11. ໜີ້ຕ້ອງຮັບຈາກທະນາຄານອື່ນ

### *11.1 ເງິນຝາກກະແສລາຍວັນ*

| | *31/12/2025*<br>*ລ້ານກີບ* | *31/12/2024*<br>*ລ້ານກີບ* |
|---|---|---|
| **ເງິນຝາກກະແສລາຍວັນກັບທະນາຄານພາຍໃນ** | | |
| ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງ | 295,592 | 30,747 |
| **ເງິນຝາກກະແສລາຍວັນກັບທະນາຄານຕ່າງປະເທດ** | | |
| ທະນາຄານ ແຫ່ງປະເທດຈີນ, ໜ່ວຍຊຽງໄຮ ອາເອັມບີ ເທຣດດິ້ງ | 171,453 | 175,082 |
| ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ | 224,182 | 281,841 |
| ທະນາຄານແຫ່ງປະເທດຈີນ (ໄທ) ຈຳກັດມະຫາຊົນ | 49,422 | 6,034 |
| ທະນາຄານແຫ່ງປະເທດຈີນ, ສາຂາແຟັງເຟີດ | 1,384 | 973 |
| ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 46,959 | 34,888 |
| ທະນາຄານແຫ່ງປະເທດຈີນ, ສາຂາຊຽງໄຮ | 113 | 144 |
| | **789,105** | **529,709** |

ອັດຕາດອກເບ້ຍສຳລັບເງິນຝາກພາຍໃນປີແມ່ນມີດັ່ງລຸ່ມນີ້:

| | *2025*<br>*ອັດຕາດອກເບ້ຍ*<br>*(% ຕໍ່ປີ)* | *2024*<br>*ອັດຕາດອກເບ້ຍ*<br>*(% ຕໍ່ປີ)* |
|---|---|---|
| ເງິນຝາກກະແສລາຍວັນ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |

## 12. ຫຼັກຊັບຖືໄວ້ຈົນຄົບກຳນົດ

| | 31/12/2025<br>*ລ້ານກີບ* | 31/12/2024<br>*ລ້ານກີບ* |
|---|---|---|
| ພັນທະບັດອອກໂດຍ ກະຊວງການເງິນ | 626,567 | 163,000 |
| | **626, 567** | **163,000** |

ພັນທະບັດອອກໂດຍກະຊວງການເງິນ ນະວັນທີ 31 ທັນວາ 2025 ລວມມີດັ່ງນີ້:

| *ໄລຍະ ເວລາ* | *ວັນທີຊື້* | *ວັນທີຊື້ຄືນ ກຳນົດ* | *ມູນຄ່າທີ່ ກຳນົດໄວ້ ລ້ານ* | *ສະກຸນ ເງິນ* | *ທຽບເທົ່າເງິນ ກີບ ລ້ານກີບ* | *ອັດຕາດອກເບ້ຍ % ຕໍ່ປີ* |
|---|---|---|---|---|---|---|
| 12 ເດືອນ | 27 ກຸມພາ 2025 | 27 ກຸມພາ 2026 | 25 | ຢວນ | 72,925 | 5.00 |
| 12 ເດືອນ | 27 ກຸມພາ 2025 | 27 ກຸມພາ 2026 | 200 | ບາດ | 129,624 | 5.00 |
| 60 ເດືອນ | 23 ມິຖຸນາ 2025 | 23 ມິຖຸນາ 2030 | 145 | ຢວນ | 424,018 | 7.00 |
| | | | | | **626,567** | |

## 13. ເງິນກູ້ໃຫ້ແກ່ລູກຄ້າ, ຫັກເງິນແຮສະເພາະສຳລັບເງິນກູ້

| | 31/12/2025<br>*ລ້ານກີບ* | 31/12/2024<br>*ລ້ານກີບ* |
|---|---|---|
| ເງິນກູ້ໃຫ້ແກ່ລູກຄ້າ (*ບົດອະທິບາຍເລກທີ 13.1*) | 5,280,203 | 4,743,888 |
| ລົບ ເງິນແຮສຳລັບເງິນກູ້ບໍ່ເກີດດອກອອກຜົນ | - | - |
| | **5,280,203** | **4,743,888** |

ອັດຕາດອກເບ້ຍສຳລັບການປ່ອຍເງິນກູ້ໃຫ້ແກ່ລູກຄ້າພາຍໃນປີແມ່ນມີດັ່ງລຸ່ມນີ້:

| | 2025<br>*ອັດຕາດອກເບ້ຍ*<br>*( % ຕໍ່ປີ)* | 2024<br>*ອັດຕາດອກເບ້ຍ*<br>*( % ຕໍ່ປີ)* |
|---|---|---|
| ເງິນກູ້ທີ່ເປັນສະກຸນເງິນກີບ | 7.50 - 12.00 | 5.75 - 10.08 |
| ເງິນກູ້ທີ່ເປັນສະກຸນເງິນໂດລາ | 3.50 - 7.50 | 2.40 - 7.50 |
| ເງິນກູ້ທີ່ເປັນສະກຸນເງິນຢວນ | 2.90 - 4.50 | 2.20 - 4.80 |

*ການວິເຄາະຕາມສະກຸນເງິນ*

| | 31/12/2025<br>*ລ້ານກີບ* | 31/12/2024<br>*ລ້ານກີບ* |
|---|---|---|
| ເງິນກູ້ທີ່ເປັນສະກຸນເງິນກີບ | 223,450 | 397,799 |
| ເງິນກູ້ທີ່ເປັນສະກຸນເງິນໂດລາ | 1,627,015 | 1,921,473 |
| ເງິນກູ້ທີ່ເປັນສະກຸນເງິນຢວນ | 3,429,738 | 2,424,616 |
| | **5,280,203** | **4,743,888** |

## 13. ເງິນກູ້ໃຫ້ແກ່ລູກຄ້າ, ຫັກເງິນແຮສະເພາະສຳລັບເງິນກູ້ (ຕໍ່)

### *13.1 ການວິເຄາະຂອງເງິນກູ້ໃຫ້ລູກຄ້າ*

*ວິເຄາະຕາມໄລຍະເວລາເດີມ*

| | 31/12/2025<br>ລ້ານກີບ | 31/12/2024<br>ລ້ານກີບ |
|---|---|---|
| ເງິນກູ້ໄລຍະສັ້ນ | 1,423,461 | 893,535 |
| ເງິນກູ້ໄລຍະກາງ | 3,173,409 | 3,244,973 |
| ເງິນກູ້ໄລຍະຍາວ | 683,333 | 605,380 |
| | **5,280,203** | **4,743,888** |

*ວິເຄາະຕາມພາກສ່ວນເສດຖະກິດ*

| | 31/12/2025<br>ລ້ານກີບ | 31/12/2024<br>ລ້ານກີບ |
|---|---|---|
| ບໍລິສັດ ອຸດສາຫະກຳ | 2,816,347 | 2,808,951 |
| ບໍລິສັດ ກໍ່ສ້າງ | 1,712,854 | 948,177 |
| ບໍລິສັດ ກະສິກຳ | 169,419 | 163,320 |
| ບໍລິສັດ ການຄ້າ | 79,368 | 12,028 |
| ທະນາຄານ | - | 94,624 |
| ອື່ນໆ | 502,215 | 716,788 |
| | **5,280,203** | **4,743,888** |

### *13.2 ເງິນແຮສຳລັບໜີ້ເສຍສິນເຊື່ອ*

**ການເຄື່ອນໄຫວຂອງເງິນແຮສຳລັບເງິນກູ້ໃຫ້ແກ່ລູກຄ້າ**

ຕາຕະລາງຂ້າງລຸ່ມສະແດງໃຫ້ເຫັນຄຸນນະພາບສິນເຊື່ອ ແລະ ຄວາມສ່ຽງສູງສຸດຕໍ່ຄວາມສ່ຽງທາງດ້ານສິນເຊື່ອໂດຍອີງຕາມການຈຳແນກຂັ້ນຕອນພາຍໃນຂອງສາຂາ. ຈຳນວນເງິນທີ່ສະເໜີແມ່ນລວມທັງໝົດຂອງຄ່າບຳລຸງລ້ຽງສຳລັບ ECL.

| | 31/12/2025<br>ຂັ້ນຕອນທີ 1<br>ແບບກຸ່ມ<br>ລ້ານກີບ | 31/12/2024<br>ຂັ້ນຕອນທີ 1<br>ແບບກຸ່ມ<br>ລ້ານກີບ |
|---|---|---|
| ເກີດດອກອອກຜົນ | 82,042 | 104,787 |
| | **82,042** | **104,787** |

**13. ເງິນກູ້ໃຫ້ແກ່ລູກຄ້າ, ຫັກເງິນແຮສະເພາະສຳລັບເງິນກູ້** (ຕໍ່)

***13.2 ເງິນແຮສຳລັບໜີ້ເສຍສິນເຊື່ອ*** (ຕໍ່)

ການສົມທຽບການປ່ຽນແປງໃນ ECL ທີ່ສອດຄ່ອງກັບມີດັ່ງລຸ່ມນີ້:

| | ຂັ້ນຕອນທີ *1*<br>ແບບກຸ່ມ<br>*ລ້ານກີບ* |
|---|---|
| **ເງິນແຮຕາມ ECL ນະວັນທີ 1 ມັງກອນ 2025** | 104,123 |
| ເກັບຄືນເງິນແຮພາຍໃນປີ | (24,470) |
| ສ່ວນຕ່າງຈາກອັດຕາແລກປ່ຽນ | 2,389 |
| **ເງິນແຮຕາມ ECL ນະວັນທີ 31 ທັນວາ 2025** | **82,042** |

**14. ເງິນກູ້ໃຫ້ແກ່ບໍລິສັດແມ່**

| | *31/12/2025*<br>*ລ້ານກີບ* | *31/12/2024*<br>*ລ້ານກີບ* |
|---|---|---|
| ເງິນກູ້ໃຫ້ແກ່ບໍລິສັດແມ່ (*) | 405,907 | 3,740,533 |
| | **405,907** | **3,740,533** |

(*) ເງິນກູ້ໃຫ້ບໍລິສັດແມ່ມີກຳນົດ ລະຫວ່າງ 1 ເດືອນ ຫາ 12 ເດືອນ ເຊິ່ງໄດ້ຮັບດອກເບ້ຍຈາກ 1.60% ຫາ 4.77% ຕໍ່ປີ.

## 15. ຊັບສິນບັດຄົງທີ່ ແລະ ສິດໃນການນຳໃຊ້ຊັບສິນ

### *15.1 ຊັບສິນບັດຄົງທີ່ມີຕົວຕົນ*

| | *ການປັບປຸງ ອາຄານ ລ້ານກີບ* | *ເຟີນີເຈີ ແລະ ເຄື່ອງຕິດຕັ້ງ ລ້ານກີບ* | *ອຸປະກອນ ຄອມພິວເຕີ ລ້ານກີບ* | *ພາຫະນະ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|---|
| **ຕົ້ນທຶນ:** | | | | | |
| ນະວັນທີ 1 ມັງກອນ 2025 | 7,448 | 3,133 | 11,822 | 2,883 | 25,286 |
| ຊື້ເຂົ້າ | - | 244 | 6,153 | 1,714 | 8,111 |
| ຂາຍອອກ | - | - | - | (2,082) | (2,082) |
| ນະວັນທີ 31 ທັນວາ 2025 | 7,448 | 3,377 | 17,975 | 2,515 | 31,315 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | | | |
| ນະວັນທີ 1 ມັງກອນ 2025 | 7,448 | 2,980 | 9,334 | 2,883 | 22,645 |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | - | 81 | 923 | 13 | 1,017 |
| ຂາຍອອກ | - | - | - | (2,082) | (2,082) |
| ນະວັນທີ 31 ທັນວາ 2025 | 7,448 | 3,061 | 10,257 | 814 | 21,580 |
| **ມູນຄ່າສຸດທິ:** | | | | | |
| ນະວັນທີ 1 ມັງກອນ 2025 | - | 153 | 2,488 | - | 2,641 |
| ນະວັນທີ 31 ທັນວາ 2025 | - | 316 | 7,718 | 1,701 | 9,735 |

| | *ການປັບປຸງ ອາຄານ ລ້ານກີບ* | *ເຟີນີເຈີ ແລະ ເຄື່ອງຕິດຕັ້ງ ລ້ານກີບ* | *ອຸປະກອນ ຄອມພິວເຕີ ລ້ານກີບ* | *ພາຫະນະ ລ້ານກີບ* | *ລວມທັງໝົດ ລ້ານກີບ* |
|---|---|---|---|---|---|
| **ຕົ້ນທຶນ:** | | | | | |
| ນະວັນທີ 1 ມັງກອນ 2024 | 7,448 | 3,022 | 10,807 | 2,883 | 24,160 |
| ຊື້ເຂົ້າ | - | 111 | 1,015 | - | 1,126 |
| ນະວັນທີ 31 ທັນວາ 2024 | 7,448 | 3,133 | 11,822 | 2,883 | 25,286 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | | | |
| ນະວັນທີ 1 ມັງກອນ 2024 | 7,448 | 2,922 | 8,481 | 2,691 | 21,542 |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | - | 58 | 853 | 192 | 1,103 |
| ນະວັນທີ 31 ທັນວາ 2024 | 7,448 | 2,980 | 9,334 | 2,883 | 22,645 |
| **ມູນຄ່າສຸດທິ:** | | | | | |
| ນະວັນທີ 1 ມັງກອນ 2024 | - | 100 | 2,326 | 192 | 2,618 |
| ນະວັນທີ 31 ທັນວາ 2024 | - | 153 | 2,488 | - | 2,641 |

## 15. ຊັບສິນບັດຄົງທີ່ ແລະ ສິດໃນການນຳໃຊ້ຊັບສິນ (ຕໍ່)

### *15.2. ສິດໃນການນຳໃຊ້ຊັບສິນ*

| | *ຕຶກອາຄານ ລ້ານກີບ* |
|---|---:|
| **ຕົ້ນທຶນ:** | |
| ນະວັນທີ 1 ມັງກອນ 2025 | 18,965 |
| ຊື້ເຂົ້າ | 6,895 |
| ນະວັນທີ 31 ທັນວາ 2025 | 25,860 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | |
| ນະວັນທີ 1 ມັງກອນ 2025 | 13,062 |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | 6,312 |
| ນະວັນທີ 31 ທັນວາ 2025 | 19,374 |
| **ມູນຄ່າສຸດທິ:** | |
| ນະວັນທີ 1 ມັງກອນ 2025 | 5,903 |
| ນະວັນທີ 31 ທັນວາ 2025 | 6,486 |

| | *ຕຶກອາຄານ ລ້ານກີບ* |
|---|---:|
| **ຕົ້ນທຶນ:** | |
| ນະວັນທີ 1 ມັງກອນ 2024 | 13,062 |
| ຊື້ເຂົ້າ | 5,903 |
| ນະວັນທີ 31 ທັນວາ 2024 | 18,965 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | |
| ນະວັນທີ 1 ມັງກອນ 2024 | 10,769 |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | 2,293 |
| ນະວັນທີ 31 ທັນວາ 2024 | 13,062 |
| **ມູນຄ່າສຸດທິ:** | |
| ນະວັນທີ 1 ມັງກອນ 2024 | 2,293 |
| ນະວັນທີ 31 ທັນວາ 2024 | 5,903 |

## 16. ດອກເບ້ຍຄ້າງຮັບ

| | 31/12/2025<br>*ລ້ານກີບ* | 31/12/2024<br>*ລ້ານກີບ* |
|---|---|---|
| **ດອກເບ້ຍຄ້າງຮັບຈາກ:** | | |
| ເງິນຝາກຢູ່ທະນາຄານອື່ນ | 79,237 | 74,388 |
| ເງິນກູ້ໃຫ້ແກ່ລູກຄ້າ | 138 | 7,421 |
| ຫຼັກຊັບຖືໄວ້ຈົນຄົບກຳນົດ | 4,175 | 948 |
| | **83,550** | **82,757** |

## 17. ຊັບສິນອື່ນໆ

| | 31/12/2025<br>*ລ້ານກີບ* | 31/12/2024<br>*ລ້ານກີບ* |
|---|---|---|
| ຊັບສິນອື່ນໆ | 1,807 | 1,787 |
| | **1,807** | **1,787** |

## 18. ໜີ້ຕ້ອງສົ່ງໃຫ້ທະນາຄານ

| | 31/12/2025<br>*ລ້ານກີບ* | 31/12/2024<br>*ລ້ານກີບ* |
|---|---|---|
| **ເງິນຝາກກະແສລາຍວັນຈາກທະນາຄານອື່ນພາຍໃນປະເທດ** | **443,770** | **578,044** |
| ທະນາຄານ ເອເອັນແຊັດ (ລາວ) ຈຳກັດ | 316,344 | 222,212 |
| ທະນາຄານ ແຄນນາເດຍລາວ ຈຳກັດ | 2 | 733 |
| ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ | 85,963 | 183,308 |
| ທະນາຄານ ລາວຈີນ ຈຳກັດ | 41,257 | 171,585 |
| ທະນາຄານ ລາວ ຝຣັ່ງ ຈຳກັດ | 204 | 206 |
| **ເງິນຝາກປະຈຳຈາກທະນາຄານອື່ນພາຍໃນປະເທດ** | **50,975** | **41,104** |
| ທະນາຄານ ແຄນນາເດຍລາວ ຈຳກັດ | 50,975 | 41,104 |
| **ກູ້ຢືມຈາກທະນາຄານຕ່າງປະເທດ** | **20,390** | **645,456** |
| ທະນາຄານແຫ່ງປະເທດຈີນ (ຣັຖກິດ) ຈຳກັດ (ບົດອະທິບາຍເລກທີ 24) | - | 575,456 |
| ທະນາຄານ ເອເອັນແຊັດ (ລາວ) ຈາກັດ | - | 40,000 |
| ທະນາຄານ ລາວຈີນ | 20,390 | 30,000 |
| | **515,135** | **1,264,604** |

ເງິນຝາກປະຈຳຈາກທະນາຄານ ແຄນນາເດຍ (ລາວ) ຈຳກັດ ມີໄລຍະເວລາ 6 ເດືອນ ແລະ ມີອັດຕາດອກເບ້ຍ 3.20% ຕໍ່ປີ.

ເງິນຝາກປະຈຳກູ້ຢືມຈາກທະນາຄານ ແຫ່ງປະເທດຈີນ ຈຳກັດ ມີໄລຍະເວລາ 1 ເດືອນ ແລະ ມີອັດຕາດອກເບ້ຍ 2.10% ຕໍ່ປີ.

## 19. ໜີ້ຕ້ອງສົ່ງໃຫ້ລູກຄ້າ

| | 31/12/2025<br>*ລ້ານກີບ* | 31/12/2024<br>*ລ້ານກີບ* |
|---|---|---|
| **ເງິນຝາກກະແສລາຍວັນ** | **4,677,380** | **4,612,731** |
| - ເປັນເງິນກີບ | 430,961 | 561,188 |
| - ເປັນສະກຸນເງິນຕ່າງປະເທດ | 4,246,419 | 4,051,543 |
| **ເງິນຝາກປະຢັດ** | **568,942** | **379,190** |
| - ເປັນເງິນກີບ | 39,963 | 26,054 |
| - ເປັນສະກຸນເງິນຕ່າງປະເທດ | 528,979 | 353,136 |
| **ເງິນຝາກມີກຳນົດ** | **8,221,448** | **7,603,587** |
| - ເປັນເງິນກີບ | 8,227 | 4,604 |
| - ເປັນສະກຸນເງິນຕ່າງປະເທດ | 8,213,221 | 7,598,983 |
| | **13,467,770** | **12,595,508** |

ອັດຕາດອກເບ້ຍຂອງເງິນຝາກພາຍໃນປີຂອງການຝາກເງິນເຫຼົ່ານີ້ ມີດັ່ງລຸ່ມນີ້:

| | 2025<br>*ອັດຕາດອກເບ້ຍ*<br>*( % ຕໍ່ປີ )* | 2024<br>*ອັດຕາດອກເບ້ຍ*<br>*( % ຕໍ່ປີ )* |
|---|---|---|
| ເງິນຝາກກະແສລາຍວັນເປັນເງິນກີບ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກກະແສລາຍວັນເປັນສະກຸນເງິນຕ່າງປະເທດ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກປະຢັດເປັນເງິນກີບ | 1.10 | 1.11 |
| ເງິນຝາກປະຢັດເປັນເງິນໂດລາ | 1.25 | 1.25 |
| ເງິນຝາກປະຢັດເປັນເງິນບາດ | 0.50 | 0.50 |
| ເງິນຝາກປະຢັດເປັນເງິນຢວນ | 0.90 | 0.90 |
| ເງິນຝາກມີກຳນົດເປັນເງິນກີບ | 3.00 - 6.25 | 3.00 - 6.25 |
| ເງິນຝາກມີກຳນົດເປັນເງິນໂດລາ | 1.75 - 5.75 | 1.75 - 5.75 |
| ເງິນຝາກມີກຳນົດເປັນເງິນບາດ | 0.90 - 4.50 | 0.90 - 4.50 |
| ເງິນຝາກໄລຍະສັ້ນເປັນເງິນຢວນ | 1.60 - 2.20 | 1.60 - 2.20 |

## 20. ດອກເບ້ຍທີ່ຕ້ອງຈ່າຍ

| | 31/12/2025<br>*ລ້ານກີບ* | 31/12/2024<br>*ລ້ານກີບ* |
|---|---|---|
| **ດອກເບ້ຍທີ່ຕ້ອງຈ່າຍ:** | | |
| ທະນາຄານອື່ນ | 649 | 764 |
| ລູກຄ້າ | 145,984 | 164,369 |
| | **146,633** | **165,133** |

## 21. ໜີ້ສິນອື່ນໆ

| | *31/12/2025*<br>*ລ້ານກີບ* | *31/12/2024*<br>*ລ້ານກີບ* |
|---|---|---|
| ຈ່າຍໃຫ້ແກ່ພະນັກງານ | 24,377 | 14,973 |
| ທຸລະກຳທີ່ລໍຖ້າສະສາງ | 38,708 | 9,585 |
| ອື່ນໆ | 9,670 | 14,555 |
| | **72,755** | **39,113** |

## 22. ອາກອນ

### *22.1. ອາກອນທີ່ຕ້ອງຈ່າຍ*

| | *31/12/2025*<br>*ລ້ານກີບ* | *31/12/2024*<br>*ລ້ານກີບ* |
|---|---|---|
| ອາກອນກຳໄລທີ່ຕ້ອງຈ່າຍ (ບົດອະທິບາຍເລກທີ 22.2) | 65,871 | 32,397 |
| | **65,871** | **32,397** |

### *22.2. ອາກອນກຳໄລ ("ອກລ")*

ສາຂາມີໜ້າທີ່ຊຳລະອາກອນກຳໄລໃນອັດຕາ 20% ຂອງກຳໄລກ່ອນຫັກອາກອນທັງໝົດເຊິ່ງສອດຄ່ອງກັບກົດໝາຍສ່ວຍສາອາກອນ ສະບັບເລກທີ 69/ສພຊ, ລົງວັນທີ 16 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ນັບຕັ້ງແຕ່ວັນທີ 1 ມັງກອນ 2020. ອາກອນກຳໄລໃນປີ 2025 ຄິດໄລ່ໄດ້ດັ່ງນີ້:

| | *2025*<br>*ລ້ານກີບ* | *2024*<br>*ລ້ານກີບ* |
|---|---|---|
| ກຳໄລກ່ອນຫັກອາກອນ | 524,488 | 487,466 |
| ລາຍການທີ່ບໍ່ອະນຸຍາດໃຫ້ຫັກເປັນລາຍຮັບ | - | - |
| ລາຍການທີ່ບໍ່ອະນຸຍາດໃຫ້ຫັກເປັນລາຍຈ່າຍ | 3,204 | 1,312 |
| **ລາຍຮັບຖືກເສຍອາກອນ** | **527,692** | **488,778** |
| **ລາຍຈ່າຍອາກອນກຳໄລຂອງທຸລະກິດ, ໃນອັດຕາຕາມກົດໝາຍ 20%** | **105,538** | **97,756** |
| ອາກອນກຳໄລທີ່ຄ້າງຊຳລະໃນຕົ້ນປີ | 32,397 | 16,613 |
| ອາກອນກຳໄລທີ່ໄດ້ຈ່າຍພາຍໃນປີ | (72,064) | (81,972) |
| **ອາກອນກຳໄລທີ່ຊຳລະ / (ເກັບຄືນໄດ້) ນະທ້າຍປີ** | **65,871** | **32,397** |

ການຄືນອາກອນຂອງສາຂາຕ້ອງໄດ້ຮັບການກວດສອບໂດຍໜ່ວຍງານດ້ານພາສີອາກອນ ເນື່ອງຈາກການບັງຄັບໃຊ້ກົດໝາຍ ແລະ ຂໍ້ບັງຄັບດ້ານພາສີອາກອນໃນທຸລະກຳຫຼາຍປະເພດມີຄວາມອ່ອນໄຫວຕໍ່ການຕີຄວາມທີ່ແຕກຕ່າງກັນ ຈຳນວນເງິນທີ່ລາຍງານໃນງົບການເງິນອາດປ່ຽນແປງໄດ້ໃນພາຍຫຼັງເມື່ອມີການພິຈາລະນາຂັ້ນສຸດທ້າຍໂດຍໜ່ວຍງານດ້ານພາສີອາກອນ.

## 23. ທຶນຈົດທະບຽນທີ່ຖອກແລ້ວ

| | *2025*<br>*ລ້ານກີບ* | *2024*<br>*ລ້ານກີບ* |
|---|---|---|
| ຍອດຍົກມາ | 405,100 | 405,100 |
| ເພີ່ມທຶນພາຍໃນປີ | - | - |
| **ຍອດເຫຼືອທ້າຍປີ** | **405,100** | **405,100** |

ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດສະບັບເລກທີ 89/ສພຊ ອອກໂດຍສະພາແຫ່ງຊາດ ລົງວັນທີ 17 ກໍລະກົດ 2023 ທີ່ມີຜົນບັງຄັບໃຊ້ນະວັນທີ 15 ກັນຍາ 2023, ສາຂາທະນາຄານຕ່າງປະເທດທັງໝົດໃນ ສປປ ລາວ ກໍານົດໃຫ້ຕ້ອງເພີ່ມທຶນຈົດທະບຽນເພື່ອໃຫ້ໄດ້ຕາມທຶນຈົດທະບຽນຂັ້ນຕໍ່າ 600,000 ລ້ານກີບ. ອີງຕາມຂໍ້ຕົກລົງ ສະບັບເລກທີ 551/BSD ລົງວັນທີ 2 ຕຸລາ 2025 ສາຂາແມ່ນຢູ່ໃນຂັ້ນຕອນໃນການປະກອບທຶນ. ເຊິ່ງຄາດວ່າຈະອອກແຈ້ງການພາຍໃນປີ 2030.

## 24. ເງິນສົດ ແລະ ທຽບເທົ່າເງິນສົດ

| | *31/12/2025*<br>*ລ້ານກີບ* | *31/12/2024*<br>*ລ້ານກີບ* |
|---|---|---|
| ເງິນສົດໃນຄັງ | 33,677 | 52,887 |
| ເງິນຝາກກະແສລາຍວັນຢູ່ ທຫລ | 1,256,293 | 1,755,823 |
| ເງິນຝາກກະແສລາຍວັນຢູ່ບັນດາທະນາຄານອື່ນ | 789,105 | 529,707 |
| | **2,079,075** | **2,338,417** |

## 25. ບັນດາລາຍການກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງແມ່ນທຸກໆລາຍການເຄື່ອນໄຫວທີ່ໄດ້ດໍາເນີນງານກັບພາກສ່ວນອື່ນ ເຊິ່ງມີສາຍພົວພັນກັບສາຂາ ຈະຖືວ່າມີສ່ວນກ່ຽວຂ້ອງກັບສາຂາ ຖ້າຫາກວ່າ:

(ກ) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ເຊິ່ງພາກສ່ວນດັ່ງກ່າວ:

- ການຄວບຄຸມ, ໄດ້ຮັບການຄວບຄຸມໂດຍ, ຫຼື ພາຍໃຕ້ການຄວບຄຸມ ໂດຍສາຂາ (ໃນນີ້ລວມມີ ທະນາຄານແມ່, ສາຂາ ແລະ ສະມາຊິກຂອງສາຂາ);
- ມີຜົນປະໂຫຍດນໍາກັນກັບສາຂາ ເຊິ່ງສົ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ກັບສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມ ສາຂາ.

(ຂ) ພາກສ່ວນດັ່ງກ່າວແມ່ນຜູ້ຮ່ວມທຶນ ເຊິ່ງສາຂາໄດ້ຮ່ວມທຶນນໍາ;

(ຄ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສໍາຄັນຂອງ ຜູ້ບໍລິຫານຫຼັກຂອງ ສາຂາ ຫຼື ທະນາຄານແມ່;

(ງ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (ກ) ຫຼື (ຄ);

(ຈ) ພາກສ່ວນທີ່ກ່ຽວຂ້ອງກໍ່ແມ່ນຜູ້ທີ່ຄວບຄຸມສາຂາ, ມີສ່ວນຮ່ວມໃນການຄວບຄຸມ ຫຼື ມີອິດທິພົນອັນ ໃຫຍ່ຫຼວງ, ຫຼື ມີສິດທິອໍານາດການໃນການອອກສຽງສ່ວນໃຫຍ່ຕໍ່ສາຂາທີ່ດໍາເນີນທຸລະກິດຢູ່, (ໂດຍທາງກົງ ຫຼື ທາງອ້ອມ), ທຸກໆພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້ (ຄ) ຫຼື (ງ); ຫຼື

**25. ບັນດາລາຍການກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)**

(ສ) ພາກສ່ວນທີ່ກ່ຽວຂ້ອງແມ່ນແຜນຜົນປະໂຫຍດພາຍຫຼັງອອກວຽກຂອງພະນັກງານຂອງສາຂາ ຫຼື ກິດຈະການອື່ນໆທີ່ມີສາຍພົວພັນກັບ ສາຂາ.

ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

| *ພາກສ່ວນກ່ຽວຂ້ອງ* | *ສາຍພົວພັນ* | *ລາຍການເຄື່ອນໄຫວ* | *31 ທັນວາ 2025 ໜີ້ຄ້າງຮັບ/(ໜີ້ຕ້ອງສົ່ງ) ລ້ານກີບ* | *31 ທັນວາ 2024 ໜີ້ຄ້າງຮັບ/(ໜີ້ຕ້ອງສົ່ງ) ລ້ານກີບ* |
|---|---|---|---|---|
| ທະນາຄານແຫ່ງປະເທດ ຈີນ (ຮົງກົງ) ຈຳກັດ | ທະນາຄານແມ່ | ເງິນຝາກກະແສລາຍວັນ | 224,182 | 281,841 |
| | | ເງິນກູ້ຢືມ | - | (575,456) |
| | | ດອກເບ້ຍຄ້າງຮັບ | - | (537) |
| | | ການປ່ອຍເງິນກູ້ໃຫ້ | 405,907 | 3,740,533 |
| | | ດອກເບ້ຍຄ້າງຮັບ | 142 | 7,426 |
| ທະນາຄານແຫ່ງປະເທດ ຈີນ ສຳນັກງານໃຫຍ່ | ສາຂາ | ເງິນຝາກກະແສລາຍວັນ | 46,959 | 34,888 |
| | | ໜີ້ຕ້ອງສົ່ງອື່ນໆ | - | - |
| ທະນາຄານແຫ່ງປະເທດ ຈີນ ຈຳກັດ, ໜ່ວຍຊຽງໄຮ ອາເອັມບີ ເທຣດດິ້ງ | ສາຂາ | ເງິນຝາກກະແສລາຍວັນ | 171,453 | 175,080 |
| ທະນາຄານແຫ່ງປະເທດ ຈີນ (ໄທ) ຈຳກັດ ມະຫາຊົນ | ສາຂາ | ເງິນຝາກກະແສລາຍວັນ | 49,422 | 6,034 |
| ທະນາຄານແຫ່ງປະເທດ ຈີນ ສາຂາຊຽງໄຮ | ສາຂາ | ເງິນຝາກກະແສລາຍວັນ | 113 | 144 |
| ທະນາຄານແຫ່ງປະເທດ ຈີນ ສາຂາແຟັງເຟີດ | ສາຂາ | ເງິນຝາກກະແສລາຍວັນ | 1,383 | 973 |

**25. ບັນດາລາຍການກັບພາກສ່ວນທີ່ກ່ຽວຂ້ອງ** (ຕໍ່)

ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງພາຍໃນ ມີດັ່ງນີ້

| | *2025*<br>*ລ້ານກີບ* | *2024*<br>*ລ້ານກີບ* |
|---|---|---|
| ການເພີ່ມຂຶ້ນ/(ຫຼຸດລົງ) ຂອງເງິນຝາກຢູ່ສາຂາອື່ນໆຂອງທະນາຄານແຫ່ງປະເທດຈີນ: | | |
| - ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ | (57,659) | (912,746) |
| - ເງິນກູ້ຢືມຢູ່ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ | 575,456 | 1,398,230 |
| - ອັດຕາດອກເບ້ຍຢູ່ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ | 537 | 2,322 |
| - ການປ່ອຍເງິນກູ້ໃຫ້ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ | (3,334,626) | (1,004,815) |
| - ອັດຕາດອກເບ້ຍຢູ່ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ | (7,284) | (21,677) |
| - ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນ ສຳນັກງານໃຫຍ່ | 12,071 | (30,931) |
| - ລາຍຈ່າຍອື່ນໆຢູ່ທະນາຄານແຫ່ງປະເທດຈີນ ສຳນັກງານໃຫຍ່ | | 53,151 |
| - ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນ ຈຳກັດ, ໜ່ວຍຊຽງໄຮ ອາເອັມບີ ເທຣດດິ້ງ | 3,627 | 60,757 |
| ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນ (ໄທ) ຈຳກັດ ມະຫາຊົນ | 43,388 | (53,358) |
| ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນ ສາຂາຊຽງໄຮ | (31) | 7 |
| ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນ ສາຂາແຟັງເຟີດ | 410 | 754 |

***ລາຍກ ໄຫວທີ່ສໍ ນຂອງສາຂາ***

ຜົນຕອບແທນໃຫ້ສະມາຊິກຂອງສະພາບໍລິຫານມີດັ່ງນີ້:

| | ສຳລັບປີທີ່ສິ້ນສຸດວັນທີ<br>*31/12/2025*<br>*ລ້ານກີບ* | ສຳລັບປີທີ່ສິ້ນສຸດວັນທີ<br>*31/12/2024*<br>*ລ້ານກີບ* |
|---|---|---|
| ເງິນເດືອນ ແລະ ໂບນັດ | 11,909 | 13,450 |
| | **11,909** | **13,450** |

## 26. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີຂອງການລາຍງານ

ບໍ່ມີບັນຫາ ຫຼື ສະຖານະການທີ່ເກີດຂຶ້ນຫຼັງຈາກວັນທີ 31 ທັນວາ 2025 ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນຂອງສາຂາ.

ກະກຽມໂດຍ:

ທ່ານ Zhou Junyu
ຜູ້ຈັດການໜ່ວຍງານການບໍລິຫານການເງິນ
ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານນາງ Li Shuping
ຜູ້ຈັດການ

ນະຄອນຫຼວງວຽງຈັນ, ສປປ ລາວ

9 ເມສາ 2026